ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 122 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 12 ສິງຫາ 2024

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 128/ສພຊ, ລົງວັນທີ 28 ມິຖຸນາ 2024 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 22/ຄປຈ, ລົງວັນທີ 29 ກໍລະກົດ 2024.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 128 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 28 / 06 / 24

**ມະຕິ**

**ກອງປະຊຸມສະພາແຫ່ງຊາດ**

**ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ)**

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ) ໃນວາລະຕອນເຊົ້າຂອງກອງປະຊຸມຄັ້ງວັນທີ 25 ມິຖຸນາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 28 ມິຖຸນາ 2024.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 60 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 28 ມິຖຸນາ 2024

# ກົດໝາຍ
# ວ່າດ້ວຍອາກອນມູນຄ່າເພີ່ມ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ການຕິດຕາມ ກວດກາ ວຽກງານອາກອນມູນຄ່າເພີ່ມ ເພື່ອໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ, ສົ່ງເສີມ ການລົງທຶນ, ການຜະລິດ, ການດຳເນີນທຸລະກິດ, ການສົ່ງອອກ, ການສະໜອງ ສິນຄ້າ ແລະ ການບໍລິການ ແນໃສ່ເພີ່ມລາຍຮັບເຂົ້າງົບປະມານແຫ່ງລັດ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 (ປັບປຸງ) ອາກອນມູນຄ່າເພີ່ມ

ອາກອນມູນຄ່າເພີ່ມ ແມ່ນ ອາກອນທີ່ເກັບ ຕາມມູນຄ່າ ສິນຄ້າ ແລະ ການບໍລິການ ທີ່ເພີ່ມຂຶ້ນ ຈາກການນຳເຂົ້າສິນຄ້າ, ການສົ່ງອອກສິນຄ້າ, ການສະໜອງ ສິນຄ້າ ແລະ ການບໍລິການ ຢູ່ພາຍໃນປະເທດ ຊຶ່ງຜູ້ຊົມໃຊ້ສຸດທ້າຍ ເປັນຜູ້ເສຍ.

ອາກອນມູນຄ່າເພີ່ມ ຂຽນຫຍໍ້ວ່າ "ອມພ".

### ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິນຄ້າ** ໝາຍເຖິງ ສິ່ງທີ່ ມີຕົວຕົນ ຫຼື ບໍ່ມີຕົວຕົນ ຊຶ່ງສາມາດ ເຄື່ອນຍ້າຍໄດ້ ຫຼື ບໍ່ສາມາດເຄື່ອນຍ້າຍໄດ້ ແລະ ຊັບສິນອື່ນ ທີ່ນຳໃຊ້ເຂົ້າໃນ ການຜະລິດ, ການສະໜອງ ສິນຄ້າ ແລະ ການບໍລິການ;

2. **ການບໍລິການ** ໝາຍເຖິງ ການຮັບໃຊ້, ການກະທຳ, ການສ້າງສິ່ງໃດໜຶ່ງ, ການໃຫ້ຄຳປຶກສາ ຫຼື ການໃຫ້ບໍລິການອື່ນ ໂດຍມີຄ່າຕອບແທນເປັນເງິນ ຫຼື ຜົນປະໂຫຍດອື່ນ;

3. **ການສົ່ງອອກ** ໝາຍເຖິງ ການສົ່ງສິນຄ້າອອກຈາກ ສປປ ລາວ ໄປຕ່າງປະເທດ ລວມທັງການສົ່ງເຂົ້າໄປເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຜ່ານລະບົບການແຈ້ງພາສີແບບເອເລັກໂຕຣນິກຂອງຂະແໜງພາສີ;

4. **ການນຳເຂົ້າ** ໝາຍເຖິງ ການນຳເອົາສິນຄ້າຈາກຕ່າງປະເທດເຂົ້າມາ ສປປ ລາວ ລວມທັງການນຳເຂົ້າສິນຄ້າຈາກເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຜ່ານລະບົບການແຈ້ງພາສີແບບເອເລັກໂຕຣນິກຂອງຂະແໜງພາສີ;

5. **ການສະໜອງສິນຄ້າ** ໝາຍເຖິງ ການມອບ, ການໂອນ ສິດຊົມໃຊ້ສິນຄ້າໃຫ້ແກ່ຜູ້ອື່ນ ໂດຍໄດ້ຮັບຄ່າຕອບແທນເປັນ ເງິນ ຫຼື ຜົນປະໂຫຍດອື່ນ ລວມທັງ ການໃຫ້ລ້າ, ການແລກປ່ຽນ, ການໃຊ້ໜີ້ ແລະ ການຊົມໃຊ້ເອງ;

6. **ການສະໜອງການບໍລິການ** ໝາຍເຖິງ ການເຄື່ອນໄຫວທຸລະກິດ ທີ່ເປັນການໃຫ້ບໍລິການ ຊຶ່ງບໍ່ແມ່ນການສະໜອງສິນຄ້າ ໂດຍໄດ້ຮັບຄ່າບໍລິການເປັນ ເງິນ ຫຼື ຜົນປະໂຫຍດອື່ນ ທີ່ສາມາດຕີລາຄາເປັນເງິນໄດ້ ລວມທັງ ການໃຫ້ບໍລິການລ້າ, ການແລກປ່ຽນ, ການໃຊ້ໜີ້, ການຊົມໃຊ້ເອງ;

7. **ຜູ້ເສຍ ອມພ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳເຂົ້າສິນຄ້າ, ຊື້ສິນຄ້າ ແລະ ຊົມໃຊ້ການບໍລິການ ຈາກ ຜູ້ມອບ ອມພ ລວມທັງ ຈາກນິຕິບຸກຄົນຕ່າງປະເທດ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດຢູ່ ສປປ ລາວ ເພື່ອຊົມໃຊ້ເອງ ຢູ່ ສປປ ລາວ;

8. **ຜູ້ມອບ ອມພ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນທຸລະກິດຢູ່ໃນລະບົບ ອມພ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດ ຫຼື ຖືກມອບໝາຍ ຈາກຂອງຂະແໜງການທີ່ກ່ຽວຂ້ອງ;

9. **ອມພ ສົ້ນອອກ** ໝາຍເຖິງ ຈຳນວນເງິນ ອມພ ທີ່ຄິດໄລ່ເກັບຈາກການສະໜອງ ສິນຄ້າ ແລະ ການບໍລິການ ຊຶ່ງຈ່າຍໂດຍ ຜູ້ຊື້ສິນຄ້າ ແລະ ຜູ້ຊົມໃຊ້ການບໍລິການ;

10. **ອມພ ສົ້ນເຂົ້າ** ໝາຍເຖິງ ຈຳນວນເງິນ ອມພ ທີ່ຜູ້ມອບ ອມພ ໄດ້ຈ່າຍ ຈາກການນຳເຂົ້າສິນຄ້າ ຫຼື ການຊື້ ສິນຄ້າ ແລະ ໃຊ້ການບໍລິການ ຢູ່ພາຍໃນປະເທດ ລວມທັງ ອມພ ທີ່ໄດ້ຈ່າຍ ໃນການຊື້ສິນຄ້າ ແລະ ໃຊ້ການບໍລິການ ຈາກນິຕິບຸກຄົນຕ່າງປະເທດ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວທຸລະກິດ;

11. **ສິນເຊື່ອ ອມພ** ໝາຍເຖິງ ອມພ ສົ້ນເຂົ້າ ຊຶ່ງຜູ້ມອບ ອມພ ໄດ້ຈ່າຍ ໃນເວລາ ນຳເຂົ້າສິນຄ້າ, ຊື້ສິນຄ້າ ແລະ ໃຊ້ການບໍລິການ ຢູ່ໃນປະເທດ ທີ່ນຳມາຫັກໃນເດືອນບໍ່ໝົດ ຕ້ອງຍົກໄປຫັກຕໍ່ໃນເດືອນຖັດໄປ;

12. **ໄລຍະການແຈ້ງ ແລະ ການມອບ ອມພ** ໝາຍເຖິງ ໄລຍະທີ່ຜູ້ມອບ ອມພ ຊຶ່ງຕ້ອງແຈ້ງ ແລະ ມອບ ອມພ ທັງໝົດ ທີ່ຕິດພັນກັບການເຄື່ອນໄຫວດຳເນີນທຸລະກິດໃນໄລຍະນັ້ນ;

13. **ຜູ້ມີພູມລຳເນົາ** ໝາຍເຖິງ ບຸກຄົນທີ່ມີທີ່ຢູ່ຖາວອນ, ມີສຳມະໂນຄົວ ຫຼື ນິຕິບຸກຄົນ ທີ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ລວມທັງ ບຸກຄົນ, ນິຕິບຸກຄົນ ທີ່ອາໄສຢູ່ ຫຼື ດຳເນີນທຸລະກິດຢູ່ໃນ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;

14. **ຜູ້ບໍ່ມີພູມລຳເນົາ** ໝາຍເຖິງ ບຸກຄົນ ທີ່ບໍ່ມີທີ່ຢູ່ຖາວອນ, ບໍ່ມີສຳມະໂນຄົວ ຫຼື ນິຕິບຸກຄົນຕ່າງປະເທດ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ລວມທັງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ບໍ່ອາໄສຢູ່ ຫຼື ບໍ່ດຳເນີນທຸລະກິດຢູ່ໃນ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;

15. **ເລືອດຄົນ** ໝາຍເຖິງ ຜະລິດຕະພັນ ຈາກ ເລືອດ ແລະ ນໍ້າເລືອດ ຄົນ ທີ່ໄດ້ຮັບການຢັ້ງຢືນການແພດວ່າມີຄຸນນະພາບ;

16. **ອັດຕາສູນສ່ວນຮ້ອຍ (0%)** ໝາຍເຖິງ ອັດຕາທີ່ຮຽກເກັບ ອມພ ຕາມການສົ່ງອອກສິນຄ້າລວມທັງຜະລິດຕະພັນແຮ່ທາດສຳເລັດຮູບ ຊຶ່ງແຕກຕ່າງຈາກການຍົກເວັ້ນ ອມພ ເນື່ອງຈາກການນຳໃຊ້ອັດຕາສູນສ່ວນຮ້ອຍ ມີສິດຂໍຄືນເງິນ ອມພ ສິ້ນເຂົ້າໄດ້. ສຳລັບການຍົກເວັ້ນນັ້ນ ບໍ່ມີສິດຂໍຫັກ ແລະ ຂໍຄືນ ອມພ ສິ້ນເຂົ້າ, ແຕ່ສາມາດເອົາ ອມພ ສິ້ນເຂົ້າລົງເປັນລາຍຈ່າຍ;

17. **ການຂົນສົ່ງຜ່ານແດນສາກົນ** ໝາຍເຖິງ ການບໍລິການຂົນສົ່ງ ຜູ້ໂດຍສານ, ສິນຄ້າ ແລະເຄື່ອງຂອງ ຜ່ານດິນແດນ ສປປ ລາວ;

18. **ລັດຖະການສ່ວຍສາອາກອນ** ໝາຍເຖິງ ກົມສ່ວຍສາອາກອນ, ສ່ວຍສາອາກອນປະຈຳ ແຂວງ, ນະຄອນຫຼວງ ແລະ ສ່ວຍສາອາກອນປະຈຳ ເມືອງ, ເທດສະບານ, ນະຄອນ;

19. **ຫ້ອງການສ່ວຍສາອາກອນ** ໝາຍເຖິງ ບ່ອນເຮັດວຽກຂອງພະນັກງານ-ລັດຖະກອນສ່ວຍສາອາກອນແຕ່ລະຂັ້ນ;

20. **ເຈົ້າໜ້າທີ່ສ່ວຍສາອາກອນ** ໝາຍເຖິງ ພະນັກງານສ່ວຍສາອາກອນ ທີ່ຖືກແຕ່ງຕັ້ງໃຫ້ໄປເຄື່ອນໄຫວ ແລະ ປະຕິບັດໜ້າທີ່ ຢູ່ສະຖານທີ່ສະເພາະ ຫຼື ວຽກງານໃດໜຶ່ງ;

21. **ເຂດເສດຖະກິດພິເສດ** ໝາຍເຖິງ ເຂດການລົງທຶນຢູ່ໃນເຂດອຳນາດອະທິປະໄຕ ແລະ ພື້ນແຜ່ນດິນຂອງ ສປປ ລາວ ທີ່ມີກົນໄກຄຸ້ມຄອງບໍລິຫານການລົງທຶນ ແລະ ນະໂຍບາຍສົ່ງເສີມສະເພາະ ຊຶ່ງຖືກສ້າງຕັ້ງຂຶ້ນໂດຍການຕົກລົງຂອງລັດຖະບານ;

22. **ເຂດເສດຖະກິດສະເພາະ** ໝາຍເຖິງ ເຂດການລົງທຶນທີ່ໄດ້ຮັບການສ້າງຕັ້ງ ໂດຍລັດຖະບານຢູ່ນອກເຂດເສດຖະກິດພິເສດ ເພື່ອດຳເນີນກິດຈະການໃນຂະແໜງການໃດໜຶ່ງສະເພາະ ເປັນຕົ້ນ ນິຄົມອຸດສາຫະກຳ, ເຂດເຕັກໂນໂລຊີລະດັບສູງ.

### ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານອາກອນມູນຄ່າເພີ່ມ

ລັດ ວາງນະໂຍບາຍ ກ່ຽວກັບວຽກງານ ອມພ ເພື່ອຊຸກຍູ້, ສົ່ງເສີມ ການຜະລິດສິນຄ້າ, ການບໍລິການ ແລະ ການລົງທຶນ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ພັດທະນາລະບົບ ການຈັດເກັບ ແລະ ການແຈ້ງມອບ ອມພ ໃຫ້ມີຄວາມສະດວກ, ທັນສະໄໝ ຮັບປະກັນ ຄວາມຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້.

ລັດ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃນການຄຸ້ມຄອງວຽກງານ ອມພ ດ້ວຍການປະກອບບຸກຄະລາກອນ, ສ້າງໂຄງລ່າງພື້ນຖານ, ສະໜອງງົບປະມານ, ພາຫະນະ ແລະ ວັດຖຸປະກອນຮັບໃຊ້ທີ່ຈຳເປັນຕາມຄວາມສາມາດໃນແຕ່ລະໄລຍະ.

ລັດ ສ້າງ ສະພາບແວດລ້ອມທີ່ດີ, ເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຜູ້ປະກອບການໃນການແຈ້ງ ແລະ ມອບ ອມພ.

### ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານອາກອນມູນຄ່າເພີ່ມ

ໃນການເຄື່ອນໄຫວວຽກງານ ອມພ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຄຸ້ມຄອງ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
2. ສົ່ງເສີມ ການຜະລິດສິນຄ້າ, ການບໍລິການ ແລະ ການລົງທຶນ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ;
3. ຮັບປະກັນ ຄວາມສະເໝີພາບ, ຄວາມທັນສະໄໝ, ບໍລິການສະດວກ, ວ່ອງໄວ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;

4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
5. ປະຕິບັດຕາມ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

**ມາດຕາ 6 ພັນທະຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຊົມໃຊ້ ສິນຄ້າ ແລະ ການບໍລິການ ຢູ່ ສປປ ລາວ ລ້ວນແຕ່ມີພັນທະເສຍ ອມພ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດ ແລະ ຊົມໃຊ້ ສິນຄ້າ ແລະ ການບໍລິການ ຢູ່ ສປປ ລາວ.

**ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານ ອມພ ດ້ວຍການ ແລກປ່ຽນ ຂໍ້ມູນ ຂ່າວສານ, ບົດຮຽນ, ເຕັກນິກ, ການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ, ການພັດທະນາຊັບພະຍາກອນມະນຸດ ເພື່ອພັດທະນາວຽກງານດັ່ງກ່າວ, ປະຕິບັດ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ພາກທີ II
## ລະບົບພື້ນຖານຂອງອາກອນມູນຄ່າເພີ່ມ

**ມາດຕາ 9 (ປັບປຸງ) ລະບົບພື້ນຖານຂອງອາກອນມູນຄ່າເພີ່ມ**

ລະບົບພື້ນຖານຂອງ ອມພ ມີ ດັ່ງນີ້:
1. ການເກັບ ອມພ;
2. ການຄິດໄລ່ ອມພ;
3. ການຫັກ ແລະ ການສົ່ງຄືນ ອມພ;
4. ການແຈ້ງ ແລະ ການມອບ ອມພ;
5. ການເຂົ້າ, ການອອກ ລະບົບ ອມພ;
6. ການຖືບັນຊີ ແລະ ການອອກໃບເກັບເງິນ ອມພ;
7. ການກວດກາ ແລະ ການຄຸ້ມຄອງ ອມພ ທີ່ຄ້າງມອບ.

### ໝວດທີ 1
### ການເກັບອາກອນມູນຄ່າເພີ່ມ

**ມາດຕາ 10 (ປັບປຸງ) ຜູ້ເກັບອາກອນມູນຄ່າເພີ່ມ**

ຜູ້ເກັບ ອມພ ປະກອບມີ ດັ່ງນີ້:
1. ເຈົ້າໜ້າທີ່ພາສີ;

2. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດຢູ່ໃນລະບົບ ອມພ;

3. ຜູ້ຊື້ສິນຄ້າ ແລະ ການບໍລິການ ຈາກນິຕິບຸກຄົນ ຕ່າງປະເທດທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ລວມທັງ ນິຕິບຸກຄົນທີ່ດຳເນີນທຸລະກິດຢູ່ໃນ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ.

**ມາດຕາ 11 (ປັບປຸງ) ກິດຈະກຳທີ່ຖືກເກັບອາກອນມູນຄ່າເພີ່ມ**

ກິດຈະກຳທີ່ຖືກເກັບ ອມພ ມີ ດັ່ງນີ້:

1. ການນຳເຂົ້າສິນຄ້າ ຈາກຕ່າງປະເທດ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;

2. ການສະໜອງ ສິນຄ້າ ແລະ ການບໍລິການ ຢູ່ ສປປ ລາວ ໂດຍ ຜູ້ມອບ ອມພ;

3. ການສະໜອງ ສິນຄ້າ ແລະ ການບໍລິການ ຢູ່ ສປປ ລາວ ໂດຍນິຕິບຸກຄົນຕ່າງປະເທດ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ;

4. ການສະໜອງ ສິນຄ້າ ແລະ ການບໍລິການ ຢູ່ນອກເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະໃນ ສປປ ລາວ ໂດຍວິສາຫະກິດທີ່ຈົດທະບຽນສ້າງຕັ້ງຢູ່ໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;

5. ການສະໜອງ ສິນຄ້າ ແລະ ການບໍລິການ ຜ່ານລະບົບເອເລັກໂຕຣນິກ ໂດຍ ຜູ້ມີພູມລຳເນົາ ຫຼື ຜູ້ບໍ່ມີພູມລຳເນົາ.

**ມາດຕາ 12 (ປັບປຸງ) ກິດຈະກຳທີ່ຖືກຍົກເວັ້ນອາກອນມູນຄ່າເພີ່ມ**

ກິດຈະກຳທີ່ຖືກຍົກເວັ້ນ ອມພ ມີ ດັ່ງນີ້:

1. ສິນຄ້າທີ່ນຳເຂົ້າ:

1.1. ແນວພັນພືດທຸກປະເພດ, ແນວພັນສັດ, ນ້ຳເຊື້ອສັດ, ວັກຊີນກັນພະຍາດ, ອຸປະກອນ ແລະ ນ້ຳຢາ (ໄນໂຕຣເຈນແຫຼວ) ເພື່ອເກັບຮັກສາ ວັກຊີນກັນພະຍາດ ແລະ ນ້ຳເຊື້ອສັດ, ຫົວອາຫານສັດ, ວັດຖຸດິບ, ວັດຖຸດິບເຄິ່ງສຳເລັດຮູບ ຮັບໃຊ້ ການຜະລິດຫົວອາຫານສັດ ແລະ ການຜະລິດຢາວັກຊີນປົວສັດ ທີ່ພາຍໃນປະເທດບໍ່ສາມາດຕອບສະໜອງໄດ້;

1.2. ວັດຖຸດິບທີ່ນຳໃຊ້ເຂົ້າໃນອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ ເປັນຕົ້ນ ການຜະລິດຝຸ່ນວິທະຍາສາດ, ຢາປາບສັດຕູພືດ ທີ່ ເປັນອັນຕະລາຍໜ້ອຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງທີ່ພາຍໃນປະເທດບໍ່ສາມາດຕອບສະໜອງໄດ້;

1.3. ວັດຖຸປະກອນ ແລະ ເຄື່ອງກົນຈັກ ຮັບໃຊ້ວຽກງານກະສິກຳ ທີ່ພາຍໃນປະເທດບໍ່ສາມາດຕອບສະໜອງໄດ້;

1.4. ເຄມີ ເພື່ອການຄົ້ນຄວ້າ, ທົດລອງ, ການວິໄຈວິທະຍາສາດ ຂອງອົງການຈັດຕັ້ງລັດ ໂດຍການອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ;

1.5. ສະແຕັມອາກອນ ຫຼື ສະແຕັມໄປສະນີ;

1.6. ເຮືອບິນ ແລະ ວັດຖຸປະກອນຮັບໃຊ້ການຂົນສົ່ງທາງອາກາດ ທັງພາຍໃນ ແລະ ຕ່າງປະເທດ ບໍ່ລວມເຮືອບິນມາຮັບໃຊ້ສ່ວນຕົວ ຫຼື ທີ່ບໍ່ໄດ້ຮັບໃຊ້ສາຍການບິນ;

1.7. ນ້ຳມັນເຊື້ອໄຟ ແລະ ນ້ຳມັນອື່ນ ເພື່ອຮັບໃຊ້ການບໍລິການຂົນສົ່ງສາກົນທາງອາກາດ;

1.8. ສິນຄ້າ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ ຂອງ ສຳນັກງານຜູ້ຕາງໜ້າ, ອົງການຈັດຕັ້ງສາກົນ ທີ່ປະຈຳ ຢູ່ ສປປ ລາວ ຕາມ ສົນທິສັນຍາ, ສັນຍາສາກົນ ແລະ ຕາມການອະນຸຍາດຈາກກະຊວງທີ່ກ່ຽວຂ້ອງ;

1.9. ປຶ້ມ ແບບຮຽນ, ແບບສອນ, ອຸປະກອນທີ່ທັນສະໄໝ ເພື່ອຮັບໃຊ້ການຮຽນ-ການສອນ, ຮັບໃຊ້ໃນຫ້ອງຄົ້ນຄວ້າ ແລະ ທົດລອງ ໂດຍການອະນຸຍາດຈາກກະຊວງທີ່ກ່ຽວຂ້ອງ;

1.10. ຄຳແຫ່ງ ເພື່ອຄ້ຳປະກັນການພິມທະນະບັດ, ການນຳເຂົ້າທະນະບັດ ແລະ ການນຳເຂົ້າ ເຄື່ອງຈັກ ແລະ ວັດຖຸປະກອນຕ່າງໆ ລວມທັງເຈ້ຍ ຫຼື ໂລຫະ ເພື່ອພິມທະນະບັດ ໂດຍທະນາຄານແຫ່ງ ສປປ ລາວ ຫຼື ຜູ້ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

1.11. ຢາປົວສັດ, ອະໄວຍະວະທຽມ ເພື່ອປ່ຽນຖ່າຍໃສ່ຮ່າງກາຍຂອງສັດ;

1.12. ຢາພື້ນເມືອງ, ອະໄວຍະວະທຽມ ເພື່ອປ່ຽນຖ່າຍໃສ່ຮ່າງກາຍຂອງຄົນ, ເລືອດຄົນ, ເຄື່ອງຄ້ຳຊູ ແລະ ລໍ້ຮັບໃຊ້ ຄົນເຈັບ, ຄົນພິການ ແລະ ຜູ້ສູງອາຍຸ;

1.13. ເຄື່ອງມື, ອຸປະກອນການແພດ, ເຄື່ອງວິເຄາະຕ່າງໆ ຂອງບັນດາໂຮງໝໍ, ສຸກສາລາ ຂອງລັດ ເພື່ອຮັບໃຊ້ບໍລິການສັງຄົມ ໂດຍການອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ;

1.14. ຍານພາຫະນະ ແລະ ເຄື່ອງຈັກ ຮັບໃຊ້ວຽກງານວິຊາສະເພາະ, ເຄື່ອນໄຫວຮັບໃຊ້ສາທາລະນະປະໂຫຍດ ເປັນຕົ້ນ ລົດດັບເພີງ, ລົດຮັບສົ່ງຄົນເຈັບ, ລົດກູ້ໄພ, ລົດສະເພາະສ້ອມແປງເຄື່ອນທີ່, ລົດຖ່າຍທອດໂທລະພາບ, ວິທະຍຸ, ເຄື່ອງວັດແທກມົນລະພິດ ຂອງລັດ ແລະ ອົງການຈັດຕັ້ງສັງຄົມ ໂດຍການອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ;

1.15. ຍານພາຫະນະ ແລະ ອຸປະກອນເຕັກນິກ ຮັບໃຊ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຍົກເວັ້ນລົດຮັບໃຊ້ວຽກງານບໍລິຫານ;

1.16. ເຄື່ອງຮັບໃຊ້ບາງປະເພດ ແລະ ຂອງຂວັນ ຂອງນັກສຶກສາ, ພະນັກງານ-ລັດຖະກອນ, ນັກການທູດ ທີ່ສຳເລັດວຽກງານຢູ່ຕ່າງປະເທດ ແລະ ຄົນຕ່າງປະເທດ ທີ່ມີຈຸດປະສົງຍົກຍ້າຍມາ ຢູ່ ສປປ ລາວ ແບບຖາວອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ, ຍົກເວັ້ນວັດຖຸສິ່ງຂອງທີ່ໄດ້ຈາກການສືບທອດມູນມໍຣະດົກ;

1.17. ສິນຄ້າ ແລະ ການບໍລິການ ເພື່ອສະໜອງໃຫ້ແກ່ໂຄງການຊ່ວຍເຫຼືອລ້າ ຊຶ່ງໄດ້ກຳນົດໄວ້ໃນ ສັນຍາ, ຂໍ້ຜູກພັນ ທີ່ລັດຖະບານເຊັນກັບຕ່າງປະເທດ;

1.18. ການນຳເຂົ້າພະລັງງານໄຟຟ້າຈາກຕ່າງປະເທດ ເພື່ອມາສະໜອງ ຢູ່ ສປປ ລາວ.

2. ການສະໜອງ ສິນຄ້າ ແລະ ການບໍລິການ ຢູ່ພາຍໃນປະເທດ:

2.1. ຜົດກະສິກຳ ທີ່ຍັງບໍ່ທັນໄດ້ຮັບການປຸງແຕ່ງ ຫຼື ຜ່ານການປຸງແຕ່ງຂັ້ນຕົ້ນ ເປັນຕົ້ນ ການຝານ, ການບົດ, ການສີເອົາເປືອກອອກ, ການເອົາເມັດອອກ;

2.2. ສັດທຸກປະເພດ ທີ່ມີຊີວິດ ຫຼື ບໍ່ມີຊີວິດ ທັງເປັນໂຕ ຫຼື ເປັນຊິ້ນສ່ວນ ທີ່ຍັງບໍ່ທັນໄດ້ປຸງແຕ່ງ ຫຼື ໄດ້ປຸງແຕ່ງຂັ້ນຕົ້ນ ເພື່ອເຮັດໃຫ້ຢູ່ໃນສະພາບສົດ ຫຼື ບໍ່ໃຫ້ເນົ່າເປື່ອຍ;

2.3. ແນວພັນພືດທຸກປະເພດ, ແນວພັນສັດ, ທີ່ອາຫານສັດ, ທຸກປະເພດຢາປິ່ນປົວ ແລະ ວັກຊິນກັນພະຍາດສັດ, ວັດຖຸດິບ, ວັດຖຸດິບເຄິ່ງສຳເລັດຮູບ ຮັບໃຊ້ ການຜະລິດທີ່ອາຫານສັດ, ຝຸ່ນສຳເລັດຮູບ, ການຜະລິດວັກຊິນກັນ ແລະ ປິ່ນປົວສັດ;

2.4. ວັດຖຸດິບ ທີ່ນຳໃຊ້ເຂົ້າໃນອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ ເປັນຕົ້ນ ການຜະລິດຝຸ່ນຊີວະພາບ, ຝຸ່ນວິທະຍາສາດ, ຢາປາບສັດຕູພືດ ທີ່ເປັນອັນຕະລາຍໜ້ອຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;

2.5. ສິນຄ້າ ໃນເຮືອບິນທີ່ບໍລິການຂົນສົ່ງສາກົນທາງອາກາດ;

2.6. ວັດຖຸປະກອນ ແລະ ເຄື່ອງກົນຈັກ ຮັບໃຊ້ວຽກງານກະສິກຳ;

2.7. ສະແຕັມອາກອນ ຫຼື ສະແຕັມໄປສະນີ;

2.8. ການຂົນສົ່ງຜ່ານແດນສາກົນ;

2.9. ປຶ້ມແບບຮຽນ, ແບບສອນ, ອຸປະກອນທີ່ທັນສະໄໝ ເພື່ອຮັບໃຊ້ການຮຽນ-ການສອນ, ຮັບໃຊ້ໃນຫ້ອງຄົ້ນຄວ້າ ແລະ ທົດລອງ ທີ່ໄດ້ຮັບອະນຸຍາດຈາກກະຊວງທີ່ກ່ຽວຂ້ອງ;

2.10. ໜັງສືພິມ, ວາລະສານການເມືອງ ແລະ ການບໍລິການ ລາຍການໂທລະພາບ, ວິທະຍຸກະຈາຍສຽງ ທີ່ເຜີຍແຜ່ ແນວທາງ ນະໂຍບາຍ ແລະ ຮັບໃຊ້ໜ້າທີ່ການເມືອງຂອງລັດ ໂດຍບໍ່ມີລັກສະນະທຸລະກິດ;

2.11. ການບໍລິການກ່ຽວກັບການ ສຶກສາ ແລະ ກິລາ ເຊັ່ນ ໂຮງຮຽນລ້ຽງເດັກ, ໂຮງຮຽນອະນຸບານ, ໂຮງຮຽນປະຖົມ, ໂຮງຮຽນມັດທະຍົມ, ໂຮງຮຽນວິຊາຊີບ, ໂຮງຮຽນສອນກິລາ-ກາຍຍະກໍາ, ວິທະຍາໄລ, ວິທະຍາຄານ ແລະ ມະຫາວິທະຍາໄລ;

2.12. ດອກເບ້ຍເງິນຝາກ, ດອກເບ້ຍເງິນກູ້, ລາຍຮັບຈາກການໂອນເງິນ, ກໍາໄລຈາກອັດຕາແລກປ່ຽນ ແລະ ທຸລະກໍາທາງດ້ານການເງິນອື່ນ ຈາກການເຄື່ອນໄຫວຂອງ ທະນາຄານທຸລະກິດ, ສະຖາບັນການເງິນອື່ນ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

2.13. ຜົນຕອບແທນທີ່ໄດ້ຈາກ ການລົງທຶນໃນຫຼັກຊັບທີ່ຈົດທະບຽນໃນຕະຫຼາດຫຼັກຊັບ, ການບໍລິການຂອງຕະຫຼາດຫຼັກຊັບ, ການບໍລິການຂອງສູນຮັບຝາກຫຼັກຊັບ, ການບໍລິການຂອງສະຖາບັນສື່ກາງດ້ານຫຼັກຊັບ ທີ່ໃຫ້ບໍລິການໃນຂົງເຂດວຽກງານຫຼັກຊັບ ແລະ ການບໍລິການອື່ນ;

2.14. ກິດຈະການປະກັນໄພ ສຸຂະພາບ, ຊີວິດ ຄົນ, ສັດລ້ຽງ ແລະ ຕົ້ນໄມ້ປູກ;

2.15. ການບໍລິການ ກວດ, ປິ່ນປົວ ແລະ ວິໄຈ ພະຍາດ ຄົນ ແລະ ສັດ;

2.16. ຢາປົວສັດ, ອະໄວຍະວະທຽມ ເພື່ອປ່ຽນຖ່າຍໃສ່ຮ່າງກາຍຂອງສັດ;

2.17. ຢາພື້ນເມືອງ, ອະໄວຍະວະທຽມ ເພື່ອປ່ຽນຖ່າຍໃສ່ຮ່າງກາຍຂອງຄົນ, ເລືອດຄົນ, ເຄື່ອງຄໍ້າຊູ ແລະ ລໍ້ຮັບໃຊ້ ຄົນເຈັບ, ຄົນພິການ ແລະ ຜູ້ສູງອາຍຸ;

2.18. ເຄື່ອງມື, ອຸປະກອນການແພດ, ເຄື່ອງວິເຄາະຕ່າງໆ ໃຫ້ແກ່ບັນດາ ໂຮງໝໍ, ສຸກສາລາຂອງລັດ ເພື່ອຮັບໃຊ້ບໍລິການສັງຄົມ;

2.19. ສິນຄ້າ ແລະ ການບໍລິການ ໃຫ້ແກ່ໂຄງການຊ່ວຍເຫຼືອລ້າ ຊຶ່ງໄດ້ກໍານົດໄວ້ໃນ ສັນຍາ, ຂໍ້ຜູກພັນ ທີ່ລັດຖະບານເຊັນກັບຕ່າງປະເທດ ແລະ ລະບຽບການທີ່ກ່ຽວຂ້ອງ;

2.20. ການສະໜອງພະລັງງານໄຟຟ້າ ຂອງຜູ້ຜະລິດພະລັງງານໄຟຟ້າ ຢູ່ພາຍໃນປະເທດໃຫ້ວິສາຫະກິດໄຟຟ້າ;

2.21. ສິນຄ້າທີ່ສະໜອງຢູ່ຮ້ານຄ້າປອດພາສີ;

2.22. ການຜະລິດພາຍໃນທີ່ສະໜອງຜົນຜະລິດໃຫ້ແກ່ໂຄງການລົງທຶນ ທີ່ຜະລິດເພື່ອສົ່ງອອກ;

2.23. ການສະໜອງ ວັດຖຸດິບ, ວັດຖຸປະກອບອື່ນ ທີ່ຜະລິດ ຢູ່ ສປປ ລາວ ຊຶ່ງຂອດການນໍາເຂົ້າໄດ້ຮັບການຍົກເວັ້ນ ຕາມລາຍການສິນຄ້າທີ່ໄດ້ກໍານົດໄວ້ໃນ ຂໍ້ 1 ຂອງມາດຕານີ້.

3. ການສົ່ງອອກ:

3.1. ແຮ່ທາດດິບ ຫຼື ແຮ່ດິບເຄິ່ງສໍາເລັດຮູບ ທີ່ສົ່ງເຂົ້າຜະລິດ ໃນເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ ແລະ ນອກເຂດ ເພື່ອປຸງແຕ່ງເປັນຜະລິດຕະພັນສໍາເລັດຮູບ ເພື່ອສົ່ງອອກໄປຕ່າງປະເທດ;

3.2. ການສົ່ງອອກພະລັງງານໄຟຟ້າ ເຂົ້າ ເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ ແລະ ການສົ່ງອອກໄປຕ່າງປະເທດ;

3.3. ການສົ່ງອອກສິນຄ້າ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 2 ຂອງມາດຕານີ້.

ກະຊວງການເງິນ ປະສານສົມທົບກັບກະຊວງອື່ນທີ່ກ່ຽວຂ້ອງ ກໍານົດບັນຊີລະອຽດກ່ຽວກັບ ສິນຄ້າ ແລະ ການບໍລິການທີ່ຖືກຍົກເວັ້ນ ອມພ ຕາມ ຂໍ້ 1, 2 ແລະ 3 ຂອງມາດຕານີ້.

**ມາດຕາ 13 (ປັບປຸງ) ສະຖານທີ່ສະໜອງ ສິນຄ້າ ແລະ ການບໍລິການ ທີ່ຖືກເກັບອາກອນມູນຄ່າເພີ່ມ**

ສະຖານທີ່ສະໜອງ ສິນຄ້າ ແລະ ການບໍລິການ ທີ່ຖືກເກັບ ອມພ ແມ່ນ ບ່ອນສະໜອງ ສິນຄ້າ ແລະ ການບໍລິການ ທີ່ເກີດຂຶ້ນໃນດິນແດນຂອງ ສປປ ລາວ ຊຶ່ງມີ ດັ່ງນີ້:

1. ສະຖານທີ່ສະໜອງສິນຄ້າ:

1.1. ສິນຄ້າທີ່ມີຕົວຈິງໃນເວລາສະໜອງ ສໍາລັບການສະໜອງສິນຄ້າ ທີ່ບໍ່ມີການຂົນສົ່ງ;

1.2. ການຂົນສົ່ງສິນຄ້າເລີ່ມຕົ້ນ ສໍາລັບການສະໜອງສິນຄ້າ ທີ່ມີການຂົນສົ່ງໂດຍຜູ້ສະ ໜອງ ເອງ ຫຼື ໃນນາມຜູ້ສະໜອງ ໂດຍຜູ້ຊື້ ຫຼື ໃນນາມຜູ້ຊື້;

1.3. ສິນຄ້າຖືກຕິດຕັ້ງ ຫຼື ປະກອບ ສໍາລັບການສະໜອງສິນຄ້າ ທີ່ມີການຕິດຕັ້ງ ຫຼື ປະກອບ ໂດຍຜູ້ສະໜອງເອງ ຫຼື ໃນນາມຜູ້ສະໜອງ;

1.4. ສໍາລັບສິນຄ້າທີ່ຖືກຂາຍຢູ່ຕ່າງປະເທດ ໂດຍຜູ້ມອບ ອມພ ກ່ອນຖືກຂົນສົ່ງ ແລະ ຖືກນໍາເຂົ້າມາ ສປປ ລາວ ໂດຍຜູ້ມອບເອງ ຫຼື ໃນນາມຜູ້ມອບ ໃຫ້ຜູ້ຊື້ທີ່ມີພູມລໍາເນົາ ຫຼື ຈົດທະບຽນສ້າງຕັ້ງວິສາຫະກິດ ຕາມກົດໝາຍຂອງ ສປປ ລາວ;

1.5. ສໍາລັບການສະໜອງສິນຄ້າຕົວຈິງ ຢູ່ ສປປ ລາວ ແຕ່ຖືກຂົນສົ່ງ ໄປຕ່າງປະເທດ, ເຂົ້າ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໂດຍຜູ້ສະໜອງ ຫຼື ຜູ້ຊື້ເອງ;

1.6. ສໍາລັບການສະໜອງສິນຄ້າ ກ່ອນການແຈ້ງເສຍພາສີຂາເຂົ້າ ໂດຍຜູ້ນໍາເຂົ້າ.

2. ສະຖານທີ່ສະໜອງການບໍລິການ:

2.1. ຜູ້ຮັບການສະໜອງການບໍລິການ ທີ່ມີພູມລໍາເນົາ ແລະ ໄດ້ຈົດທະບຽນສ້າງຕັ້ງວິສາຫະກິດ ຕາມກົດໝາຍຂອງ ສປປ ລາວ;

2.2. ການບໍລິການທີ່ປຶກສາ ພົວພັນກັບຂໍ້ມູນ ຢູ່ ສປປ ລາວ ເຖິງວ່າຜູ້ຮັບການສະໜອງການບໍລິການ ຈະມີພູມລໍາເນົາ ແລະ ໄດ້ຈົດທະບຽນສ້າງຕັ້ງວິສາຫະກິດ ຕາມກົດໝາຍຂອງ ສປປ ລາວ ຫຼື ບໍ່ ກໍຕາມ;

2.3. ການບໍລິການ ທີ່ຕິດພັນໂດຍກົງກັບອະສັງຫາລິມະຊັບ ຕັ້ງຢູ່ ສປປ ລາວ ເຊັ່ນ ການອອກແບບ, ການກໍ່ສ້າງ, ການບໍາລຸງຮັກສາ, ການສ້ອມແປງ, ການບໍລິການ ແລະ ການເຄື່ອນໄຫວອື່ນ;

2.4. ການບໍລິການໃຫ້ເຊົ່າ ສິນຄ້າ ຫຼື ຊັບສິນ ຂອງວິສາຫະກິດ ທີ່ສາມາດເຄື່ອນຍ້າຍໄດ້ ເປັນຕົ້ນ ລົດ, ເຮືອ, ເຮືອບິນ ຂອງຜູ້ມອບ ອມພ ຖ້າວ່າສິນຄ້ານັ້ນຖືກນໍາໃຊ້ຕົວຈິງ ຢູ່ ສປປ ລາວ;

2.5. ການບໍລິການຂົນສົ່ງໂດຍສານ ແລະ ສິນຄ້າ ຖ້າວ່າການເຄື່ອນໄຫວຕົວຈິງ ຫາກເກີດຂຶ້ນຢູ່ ສປປ ລາວ;

2.6. ການບໍລິການກິດຈະກໍາທາງດ້ານ ວັດທະນະທໍາ, ສິນລະປະກໍາ, ກິລາ-ກາຍຍະກໍາ, ວິທະຍາສາດ, ການສຶກສາ, ສາທາລະນະສຸກ, ບັນເທີງ ຫຼື ຄ້າຍຄືກັນ ລວມເຖິງການສະໜອງການບໍລິການໃຫ້ຜູ້ຈັດງານທີ່ກ່ຽວຂ້ອງກັບກິດຈະການເຫຼົ່ານີ້;

2.7. ການບໍລິການດ້ານ ໄປສະນີ ແລະ ໂທລະຄົມມະນາຄົມ ຖ້າວ່າບ່ອນສະໜອງການບໍລິການດັ່ງກ່າວ ຫາກຈົດທະບຽນສ້າງຕັ້ງວິສາຫະກິດ ຕາມກົດໝາຍຂອງ ສປປ ລາວ ເຖິງວ່າຜູ້ຮັບການສະໜອງການບໍລິການ ຈະຢູ່ ພາຍໃນ ຫຼື ຕ່າງປະເທດ ກໍຕາມ ແຕ່ບໍ່ລວມເອົາການບໍລິການໃຫ້ເຊົ່າດາວທຽມ ທີ່ບໍ່ໄດ້ສະໜອງການບໍລິການພາຍໃນປະເທດ;

2.8. ການບໍລິການທ່ອງທ່ຽວ ແລະ ກິດຈະການອື່ນທີ່ປົ່ນອ້ອມ.

## ໝວດທີ 2
## ການຄິດໄລ່ອາກອນມູນຄ່າເພີ່ມ

### ມາດຕາ 14 ວິທີຄິດໄລ່ອາກອນມູນຄ່າເພີ່ມ

ວິທີຄິດໄລ່ ອມພ ໃຫ້ເອົາ ພື້ນຖານການຄິດໄລ່ ອມພ ຄູນ ອັດຕາ ອມພ.

**ມາດຕາ 15 (ປັບປຸງ) ພື້ນຖານການຄິດໄລ່ອາກອນມູນຄ່າເພີ່ມ**

ພື້ນຖານການຄິດໄລ່ ອມພ ໃຫ້ປະຕິບັດ ດັ່ງນີ້:

1. ສຳລັບສິນຄ້າ ແລະ ການບໍລິການທົ່ວໄປ:

1.1. ລາຄາ ຊື້ ຂາຍ ຕົວຈິງຮອດຊາຍແດນ ບວກ ພາສີຂາເຂົ້າ ບວກ ອາກອນຊົມໃຊ້ (ຖ້າມີ) ສຳລັບການນຳເຂົ້າສິນຄ້າ;

1.2. ມູນຄ່າການສະໜອງ ສິນຄ້າ ແລະ ການບໍລິການ ບວກ ອາກອນຊົມໃຊ້ (ຖ້າມີ) ແຕ່ບໍ່ລວມ ອມພ ສຳລັບການສະໜອງ ສິນຄ້າ ແລະ ການບໍລິການ ຢູ່ພາຍໃນປະເທດ;

1.3. ມູນຄ່າການຊື້ ສິນຄ້າ ແລະ ການບໍລິການຕົວຈິງ ທີ່ບໍ່ລວມ ອມພ ສຳລັບການສະໜອງ ສິນຄ້າ ແລະ ການບໍລິການຈາກ ນິຕິບຸກຄົນຕ່າງປະເທດ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ;

1.4. ມູນຄ່າຊື້ ສິນຄ້າ ແລະ ການບໍລິການ ຕົວຈິງ ທີ່ບໍ່ລວມ ອມພ ສຳລັບການສະໜອງ ສິນຄ້າ ແລະ ການບໍລິການ ຈາກຜູ້ມີພູມລຳເນົາທີ່ໄດ້ສ້າງຕັ້ງວິສາຫະກິດຢູ່ໃນ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;

1.5. ລາຄາ ຊື້ ຂາຍ ຕົວຈິງຮອດຊາຍແດນ ບວກ ພາສີຂາເຂົ້າ ບວກ ອາກອນຊົມໃຊ້ (ຖ້າມີ) ບວກ ກຳໄລລວມ ສຳລັບຜູ້ນຳເຂົ້າສິນຄ້າເພື່ອຊົມໃຊ້ເອງ;

1.6. ມູນຄ່າການສະໜອງ ສິນຄ້າ ແລະ ການບໍລິການ ຕາມຕົວຈິງ ຫຼື ທ້ອງຕະຫຼາດ ບວກ ອາກອນຊົມໃຊ້ (ຖ້າມີ) ສຳລັບ ການແລກປ່ຽນ, ການໃຫ້ລ້າ, ການໃຊ້ໜີ້ ແລະ ການຊົມໃຊ້ເອງ;

1.7. ມູນຄ່າການສະໜອງ ສິນຄ້າ ແລະ ການບໍລິການ ຕົວຈິງ ບວກ ອາກອນຊົມໃຊ້ (ຖ້າມີ) ສຳລັບການສະໜອງ ສິນຄ້າ ແລະ ການບໍລິການ ຜ່ານລະບົບເອເລັກໂຕຣນິກ.

2. ສຳລັບແຮ່ທາດ:

2.1. ລາຄາ ຊື້ ຂາຍ ຕົວຈິງຮອດດ່ານຊາຍແດນ ບວກ ພາສີຂາເຂົ້າ ສຳລັບການນຳເຂົ້າ;

2.2. ລາຄາ ຊື້ ຂາຍ ຕົວຈິງ ຫຼື ລາຄາຕະຫຼາດສາກົນ ຫຼື ລາຄາທີ່ລັດຖະບານກຳນົດ ສຳລັບການສະໜອງ ຫຼື ຊື້ ຂາຍ ແຮ່ທາດ ຢູ່ ສປປ ລາວ, ສົ່ງອອກ ໄປຕ່າງປະເທດ, ສົ່ງເຂົ້າເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ລວມທັງການແລກປ່ຽນ, ການໃຫ້ລ້າ, ການໃຊ້ໜີ້ ແລະ ການຊົມໃຊ້ເອງ.

3. ສຳລັບພະລັງງານໄຟຟ້າ:

3.1. ບໍລິມາດຫົວໜ່ວຍພະລັງງານໄຟຟ້າຕາມໜໍ້ນັບໄຟ ທີ່ບັນທຶກໃນແຕ່ລະເດືອນ ຄູນໃຫ້ລາຄາຕາມສັນຍາ ຊື້ ຂາຍ ພາຍໃນ ຫຼື ຕ່າງປະເທດ ສຳລັບຜູ້ພະລິດພະລັງງານໄຟຟ້າ;

3.2. ລາຄາພະລັງງານໄຟຟ້າ ຕາມຂັ້ນການຊົມໃຊ້ພະລັງງານໄຟຟ້າ ທີ່ລັດຖະບານກຳນົດໃນແຕ່ລະໄລຍະ ຫຼື ຕາມສັນຍາ ຊື້ ຂາຍ ພະລັງງານໄຟຟ້າ ສຳລັບ ວິສາຫະກິດໄຟຟ້າ ແລະ ຜູ້ຊົມໃຊ້.

ໃນກໍລະນີ ຜູ້ມອບ ອມພ ມີລາຍຮັບສຳຮອງ ກໍໃຫ້ລວມເຂົ້າເປັນພື້ນຖານການຄິດໄລ່ ອມພ ອັນດຽວ.

ຖ້າວ່າລາຍຮັບຈາກການດຳເນີນທຸລະກິດ ຫາກເປັນເງິນຕາຕ່າງປະເທດ ກໍໃຫ້ຄິດໄລ່ເປັນເງິນກີບຕາມອັດຕາແລກປ່ຽນຂອງທະນາຄານ ແຫ່ງ ສປປ ລາວ ໃນເວລານັ້ນ.

**ມາດຕາ 16 ການດັດແກ້ພື້ນຖານການຄິດໄລ່ອາກອນມູນຄ່າເພີ່ມ**

ພື້ນຖານການຄິດໄລ່ ອມພ ຈະຖືກດັດແກ້ຕາມແຕ່ລະກໍລະນີ ດັ່ງນີ້:

1. ລູກຄ້າສົ່ງ ສິນຄ້າ ຫຼື ຄ່າບໍລິການ ຄືນ ບາງສ່ວນ ຫຼື ທັງໝົດ;
2. ຜູ້ມອບ ອມພ ຍົກເລີກການຊື້ ສິນຄ້າ ຫຼື ການບໍລິການ ຕາມພາຍຫຼັງ;
3. ຜູ້ມອບ ອມພ ໄດ້ມີການ ຫຼຸດ ຫຼື ເພີ່ມ ລາຄາ ສິນຄ້າ ຫຼື ຄ່າບໍລິການ ຕາມພາຍຫຼັງ.

ການດັດແກ້ພື້ນຖານການຄິດໄລ່ ອມພ ຕາມແຕ່ລະກໍລະນີທີ່ໄດ້ກໍານົດໄວ້ໃນມາດຕານີ້ ຈະຖືກປະຕິບັດໄດ້ ກໍຕໍ່ເມື່ອຜູ້ສະໜອງ ໄດ້ອອກໃບເກັບເງິນທີ່ມີ ອມພ ແລະ ໄດ້ແຈ້ງມອບຈໍານວນເງິນ ອມພ ຕາມກົດໝາຍ.

**ມາດຕາ 17 (ປັບປຸງ) ອັດຕາອາກອນມູນຄ່າເພີ່ມ**

ອັດຕາ ອມພ ມີ ດັ່ງນີ້:

1. ອັດຕາ ສິບສ່ວນຮ້ອຍ (10%):

1.1. ການນໍາເຂົ້າສິນຄ້າ;

1.2. ການສະໜອງ ສິນຄ້າ ແລະ ການບໍລິການ ທີ່ຖືກເກັບ ອມພ ຢູ່ ສປປ ລາວ;

1.3. ການຊື້ສິນຄ້າ ແລະ ການບໍລິການ ຈາກນິຕິບຸກຄົນຕ່າງປະເທດ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດຢູ່ ສປປ ລາວ.

2. ອັດຕາ ສູນສ່ວນຮ້ອຍ (0%) ສໍາລັບການສົ່ງອອກສິນຄ້າ ໄປຕ່າງປະເທດ, ເຂົ້າ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ລວມທັງຜະລິດຕະພັນແຮ່ທາດສໍາເລັດຮູບ.

**ມາດຕາ 18 (ປັບປຸງ) ການ ຄິດໄລ່ ແລະ ເກັບອາກອນມູນຄ່າເພີ່ມ**

ການ ຄິດໄລ່ ແລະ ເກັບ ອມພ ໃຫ້ປະຕິບັດຕາມແຕ່ລະກໍລະນີ ດັ່ງນີ້:

1. ການນໍາເຂົ້າສິນຄ້າຈາກຕ່າງປະເທດ ໃຫ້ ຄິດໄລ່ ແລະ ເກັບ ໃນເວລາແຈ້ງເສຍພາສີຂາເຂົ້າ;

2. ການສະໜອງ ສິນຄ້າ ແລະ ການບໍລິການ ຢູ່ພາຍໃນປະເທດ ໃຫ້ ຄິດໄລ່ ແລະ ເກັບ ໃນເວລາມີການສະໜອງ ສິນຄ້າ ແລະ ການບໍລິການ. ສໍາລັບ ສິນຄ້າ ແລະ ການບໍລິການ ທີ່ ແລກປ່ຽນ, ໃຫ້ລ້າ, ໃຊ້ໜີ້ ແລະ ຊົມໃຊ້ເອງ ໃຫ້ຄິດໄລ່ ແລະ ເກັບ ໃນເວລາມີການນໍາໃຊ້ຕົວຈິງ ຫຼື ໃນເວລາມີການ ໂອນ ຫຼື ມອບ ກໍາມະສິດ;

3. ການຊື້ສິນຄ້າ ແລະ ການບໍລິການ ຈາກນິຕິບຸກຄົນຕ່າງປະເທດ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດຢູ່ ສປປ ລາວ ໃຫ້ ຫັກ ແລະ ເກັບ ອມພ ໄວ້ ໃນເວລາມີການເບີກຈ່າຍເງິນ ໃຫ້ນິຕິບຸກຄົນດັ່ງກ່າວ.

ສໍາລັບສິນຄ້າທີ່ມີຄວາມສໍາຄັນ ແລະ ຈໍາເປັນ ໃຫ້ລັດຖະບານເປັນຜູ້ກໍານົດລະບຽບການສະເພາະ.

**ມາດຕາ 19 ກໍານົດເວລາຄິດໄລ່ ແລະ ເກັບອາກອນມູນຄ່າເພີ່ມ ຄືນ**

ເຈົ້າໜ້າທີ່ສ່ວຍສາອາກອນ ສາມາດຄິດໄລ່ ແລະ ເກັບ ອມພ ຄືນຍ້ອນຫຼັງໄດ້ ພາຍໃນເວລາ ສາມປີ ນັບແຕ່ວັນໄດ້ໄລ່ລຽງ ແລະ ມອບ ອມພ ຖ້າຫາກເຫັນວ່າມີ ຫຼັກຖານຢັ້ງຢືນຊັດເຈນ ແລະ ຂໍ້ມູນພຽງພໍ.

ອມພ ທີ່ຄິດໄລ່ຄືນນັ້ນ ຕ້ອງມອບພາຍໃນເວລາ ສິບຫ້າວັນ ນັບແຕ່ວັນລັດຖະການສ່ວຍສາອາກອນໄດ້ອອກເອກະສານຄິດໄລ່ທາງການ ເປັນຕົ້ນໄປ.

## ໝວດທີ 3
## ການຫັກ ແລະ ການສົ່ງຄືນອາກອນມູນຄ່າເພີ່ມ

**ມາດຕາ 20 (ປັບປຸງ) ການຫັກ ແລະ ການສົ່ງຄືນ ອາກອນມູນຄ່າເພີ່ມ**

ການຫັກ ອມພ ແມ່ນ ການຫັກ ອມພ ສົ້ນເຂົ້າ ຄືນໃຫ້ ຜູ້ມອບ ອມພ.

ການສົ່ງຄືນ ອມພ ແມ່ນ ການທົດແທນຄືນ ອມພ ໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຈ່າຍ ອມພ ຈາກການນໍາເຂົ້າສິນຄ້າ, ການຊື້ສິນຄ້າ ແລະ ການບໍລິການ ຢູ່ພາຍໃນປະເທດ, ການຊື້ສິນຄ້າ ແລະ ການ

ບໍລິການ ຈາກນິຕິບຸກຄົນຕ່າງປະເທດ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ, ຈາກການສົ່ງອອກ, ມີສິນເຊື່ອ ອມພ ເກີນ ສາມເດືອນ, ຍົກເລີກ, ແຍກກິດຈະການ, ຢຸດເຊົາກິດຈະການ ຫຼື ລົ້ມລະລາຍ ຕາມກົດໝາຍ.

**ມາດຕາ 21 (ປັບປຸງ) ຜູ້ມີສິດຫັກອາກອນມູນຄ່າເພີ່ມສິ້ນເຂົ້າ**

ຜູ້ມີສິດຫັກ ອມພ ສິ້ນເຂົ້າ ແມ່ນ ຜູ້ມອບ ອມພ ທີ່ປະຕິບັດ ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 22 ແລະ 23 ຂອງກົດໝາຍສະບັບນີ້.

**ມາດຕາ 22 (ປັບປຸງ) ອາກອນມູນຄ່າເພີ່ມສິ້ນເຂົ້າທີ່ອະນຸຍາດໃຫ້ຫັກ**

ອມພ ສິ້ນເຂົ້າ ທີ່ອະນຸຍາດໃຫ້ຫັກ ແມ່ນ ອມພ ສິ້ນເຂົ້າ ທີ່ຕິດພັນໂດຍກົງກັບ ສິນຄ້າ ແລະ ການບໍລິການ ທີ່ນຳໃຊ້ເຂົ້າໃນ ການຜະລິດ, ການດຳເນີນທຸລະກິດ ຫຼື ການສະໜອງ ສິນຄ້າ ແລະ ການບໍລິການ ທີ່ຖືກເສຍ ອມພ.

**ມາດຕາ 23 (ປັບປຸງ) ເງື່ອນໄຂການຫັກອາກອນມູນຄ່າເພີ່ມສິ້ນເຂົ້າ**

ເງື່ອນໄຂການຫັກ ອມພ ສິ້ນເຂົ້າ ມີ ດັ່ງນີ້:

1. ອມພ ທີ່ໄດ້ມອບແລ້ວ ຈາກການຊື້ສິນຄ້າ ແລະ ການບໍລິການ ຈາກນິຕິບຸກຄົນຕ່າງປະເທດ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ;
2. ຜູ້ມອບ ອມພ ໂດຍມີການແຈ້ງມອບ ອມພ ເປັນປົກກະຕິແຕ່ລະເດືອນ, ແຈ້ງມອບຜ່ານລະບົບຄຸ້ມຄອງຂໍ້ມູນລາຍຮັບສ່ວຍສາອາກອນ (Tax RIS), ມອບເງິນຜ່ານ ລະບົບທະນາຄານ ແລະ ລະບົບອື່ນ ທີ່ທະນາຄານແຫ່ງ ສປປ ລາວ ອະນຸຍາດ ຫຼື ຜ່ານຄັງເງິນແຫ່ງຊາດ;
3. ການ ຊື້ ຂາຍ ສິນຄ້າ ແລະ ການບໍລິການ ຕ້ອງຊຳລະຜ່ານລະບົບທະນາຄານ ຢູ່ ສປປ ລາວ;
4. ເອກະສານຢັ້ງຢືນການຂໍຫັກ ຖືກຕ້ອງ ແລະ ຄົບຖ້ວນ ເຊັ່ນ ໃບເກັບເງິນ, ໃບຮັບເງິນ, ໃບແຈ້ງມີ ແລະ ເອກະສານຢັ້ງຢືນອື່ນ;
5. ອມພ ສິ້ນເຂົ້າ ຕ້ອງເລີ່ມຫັກໃນເດືອນທີ່ມີ ອມພ ສິ້ນເຂົ້າເກີດຂຶ້ນ ຖ້າຫັກບໍ່ໝົດ ພາຍໃນເວລາ ສາມເດືອນ ກໍສາມາດຂໍຄືນເປັນເງິນໄດ້.

ຈຸລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ທີ່ໄດ້ເຂົ້າລະບົບ ອມພ ໃນໄລຍະ ໜຶ່ງ ປີ ທຳອິດ ສາມາດຫັກ ອມພ ສິ້ນເຂົ້າແບບກຳນົດ ຕາມລະບຽບການທີ່ ກະຊວງການເງິນ ວາງອອກ.

**ມາດຕາ 24 (ປັບປຸງ) ອາກອນມູນຄ່າເພີ່ມສິ້ນເຂົ້າ ທີ່ບໍ່ອະນຸຍາດໃຫ້ຫັກ**

ອມພ ສິ້ນເຂົ້າ ທີ່ບໍ່ອະນຸຍາດໃຫ້ຫັກ ແມ່ນ ອມພ ທີ່ໄດ້ຈ່າຍໃນເວລາ ນຳເຂົ້າສິນຄ້າ, ຊື້ສິນຄ້າ ແລະ ການບໍລິການ ຕາມແຕ່ລະກໍລະນີ ດັ່ງນີ້:

1. ອມພ ສິ້ນເຂົ້າ ທີ່ຕິດພັນກັບການສະໜອງ ທີ່ຖືກຍົກເວັ້ນ ອມພ;
2. ອມພ ສິ້ນເຂົ້າ ທີ່ໄດ້ຮັບການຫັກ, ສົ່ງຄືນ ຫຼື ລົງເປັນລາຍຈ່າຍແລ້ວ;
3. ອມພ ສິ້ນເຂົ້າ ຈາກການປະຕິບັດບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ແລະ 23 ຂອງກົດໝາຍສະບັບນີ້;
4. ອມພ ສິ້ນເຂົ້າຂອງ ສິນຄ້າ ແລະ ການບໍລິການ ທີ່ບໍ່ໄດ້ນຳໃຊ້ໂດຍກົງເຂົ້າໃນການດຳເນີນທຸລະກິດ ຊຶ່ງຕິດພັນກັບລາຍຈ່າຍຂອງຜູ້ມອບ ອມພ ມີ ດັ່ງນີ້:
   - 4.1. ລາຍຈ່າຍທີ່ຕິດພັນກັບການຊື້ ສິນຄ້າ ແລະ ການບໍລິການ ທີ່ບໍ່ເປັນການດຳເນີນທຸລະກິດໂດຍກົງ;

4.2. ລາຍຈ່າຍນອກທຸລະກິດ ແລະ ລາຍຈ່າຍສ່ວນຕົວຂອງເຈົ້າຂອງທຸລະກິດ, ຜູ້ຖືຮຸ້ນ ຫຼື ຂາຮຸ້ນ ແລະ ພະນັກງານຂອງຕົນ;

4.3. ລາຍຈ່າຍຂອງທຸລະກິດ ທີ່ບໍ່ມີເອກະສານຢັ້ງຢືນ ຫຼື ມີເອກະສານຢັ້ງຢືນ ແຕ່ບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ;

4.4. ລາຍຈ່າຍທີ່ຕິດພັນກັບຊັບສິນບັດຄົງທີ່ ທີ່ບໍ່ໄດ້ຈົດ ຫຼື ໄດ້ຈົດເປັນຊັບສິນຂອງວິສາຫະກິດ ແຕ່ບໍ່ໄດ້ນຳໃຊ້ເຂົ້າໃນການດຳເນີນທຸລະກິດທັງໝົດ ຫຼື ບາງສ່ວນ ເປັນຕົ້ນ ເອົາໃຫ້ຜູ້ຖືຮຸ້ນ, ຜູ້ອຳນວຍການ, ຜູ້ຈັດການ ຫຼື ພະນັກງານ ນຳໃຊ້ສ່ວນຕົວ ຫຼື ມີເກີນຄວາມຕ້ອງການໃນການດຳເນີນທຸລະກິດ;

4.5. ລາຍຈ່າຍທີ່ຕິດພັນກັບ ໄຟຟ້າ, ນ້ຳປະປາ, ນ້ຳມັນເຊື້ອໄຟ, ອາຍແກັດ ສະເພາະອັດຕາສ່ວນທີ່ບໍ່ໄດ້ນຳໃຊ້ໂດຍກົງເຂົ້າໃນການດຳເນີນທຸລະກິດ;

5. ອມພ ສົ້ນເຂົ້າ ທີ່ມີເອກະສານຢັ້ງຢືນຖືກຕ້ອງ ແຕ່ບໍ່ໄດ້ບັນທຶກເຂົ້າໃນໃບແຈ້ງ-ມອບ ອມພ ເກີນສາມເດືອນ ນັບແຕ່ເດືອນທີ່ມີ ອມພ ສົ້ນເຂົ້າເກີດຂຶ້ນ ແຕ່ອະນຸຍາດໃຫ້ລົງເປັນລາຍຈ່າຍ;

6. ອມພ ສົ້ນເຂົ້າ ທີ່ຕິດພັນກັບການຊົມໃຊ້ການບໍລິການຂົນສົ່ງ ຈາກນິຕິບຸກຄົນຕ່າງປະເທດ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ;

7. ອມພ ສົ້ນເຂົ້າ ຈາກພະລັງງານໄຟຟ້າ ແຕ່ອະນຸຍາດໃຫ້ລົງເປັນ ລາຍຈ່າຍ ຫຼື ຕົ້ນທຶນຊັບສິນບັດຄົງທີ່, ຍົກເວັ້ນການສະໜອງໄຟຟ້າ ໃຫ້ຜູ້ຊົມໃຊ້ ຢູ່ ສປປ ລາວ;

8. ອມພ ສົ້ນເຂົ້າ ຈາກແຮ່ທາດ ໃນຂອດການສົ່ງອອກ ແຕ່ອະນຸຍາດໃຫ້ລົງເປັນລາຍຈ່າຍ ຫຼື ຕົ້ນທຶນຊັບສິນບັດຄົງທີ່.

## ມາດຕາ 25 (ປັບປຸງ) ຜູ້ມີສິດຂໍຄືນອາກອນມູນຄ່າເພີ່ມ

ຜູ້ມີສິດຂໍຄືນ ອມພ ມີ ດັ່ງນີ້:

1. ຜູ້ມອບ ອມພ ທີ່ສົ່ງອອກສິນຄ້າ ຕາມກິດຈະກຳທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້;

2. ຜູ້ມອບ ອມພ ຊຶ່ງໄດ້ໄລ່ລຽງເປັນແຕ່ລະເດືອນ ແຕ່ຫັກ ອມພ ສົ້ນເຂົ້າບໍ່ໝົດ ພາຍໃນເວລາສາມເດືອນ ນັບແຕ່ເດືອນທີ່ມີ ອມພ ສົ້ນເຂົ້າ ເກີດຂຶ້ນ;

3. ຜູ້ມອບ ອມພ ທີ່ຄອບກິດຈະການ ສຳລັບຫົວໜ່ວຍທີ່ຖືກ ຍົກເລີກ, ແຍກກິດຈະການ, ຢຸດເຊົາ ຫຼື ລົ້ມລະລາຍ ຕາມກົດໝາຍ;

4. ສຳນັກງານຜູ້ຕາງໜ້າ, ອົງການຈັດຕັ້ງສາກົນ ແລະ ນັກການທູດ ຕາມການຢັ້ງຢືນຂອງກະຊວງການຕ່າງປະເທດ;

5. ຜູ້ໂດຍສານ ແລະ ນັກທ່ອງທ່ຽວຕ່າງປະເທດ ທີ່ຊື້ສິນຄ້າ ຢູ່ ສປປ ລາວ ແລະ ນຳສິນຄ້າດັ່ງກ່າວໄປຊົມໃຊ້ຢູ່ຕ່າງປະເທດ ໂດຍຜ່ານດ່ານສະໜາມບິນສາກົນ ແລະ ດ່ານສາກົນທີ່ໄດ້ຮັບອະນຸຍາດ;

6. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ເສຍ ອມພ ເກີນກວ່າທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ມາດຕາ 26 (ປັບປຸງ) ອາກອນມູນຄ່າເພີ່ມທີ່ອະນຸຍາດໃຫ້ສົ່ງຄືນ

ອມພ ທີ່ອະນຸຍາດໃຫ້ສົ່ງຄືນ ມີ ດັ່ງນີ້:

1. ອມພ ສົ້ນເຂົ້າ ຂອງກິດຈະກຳທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້ ສຳລັບສິນຄ້າທີ່ສົ່ງອອກ;

2. ອມພ ສົ້ນເຂົ້າ ຊຶ່ງໄດ້ໄລ່ລຽງເປັນແຕ່ລະເດືອນ ແຕ່ຫັກບໍ່ໝົດ ພາຍໃນເວລາ ສາມເດືອນ ນັບແຕ່ເດືອນ ທີ່ມີ ອມພ ສົ້ນເຂົ້າ ເກີດຂຶ້ນ;

3. ອມພ ສົ້ນເຂົ້າ ທີ່ຍັງເຫຼືອໃນເວລາຄວບກິດຈະການ ສໍາລັບຫົວໜ່ວຍທີ່ຖືກ ຍົກເລີກ, ແຍກກິດຈະການ, ຢຸດເຊົາກິດຈະການ ຫຼື ລົ້ມລະລາຍ ຕາມກົດໝາຍ;

4. ອມພ ທີ່ຕິດພັນກັບການຊື້ສິນຄ້າ ຢູ່ພາຍໃນປະເທດ ຂອງ ສໍານັກງານຜູ້ຕາງໜ້າ, ອົງການຈັດຕັ້ງສາກົນ ແລະ ນັກການທູດ;

5. ອມພ ທີ່ຕິດພັນກັບການຊື້ສິນຄ້າ ຢູ່ ສປປ ລາວ ຂອງ ຜູ້ໂດຍສານຂາອອກ ແລະ ນັກທ່ອງທ່ຽວຕ່າງປະເທດ ເພື່ອໄປຊົມໃຊ້ຢູ່ຕ່າງປະເທດ.

6. ອມພ ທີ່ ເສຍເກີນ ຕິດພັນກັບການຊື້ ສິນຄ້າ ແລະ ການບໍລິການ ຢູ່ພາຍໃນປະເທດ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

ວິທີການ, ຂັ້ນຕອນ ແລະ ເງື່ອນໄຂ ການສົ່ງຄືນ ອມພ ສໍາລັບ ຂໍ້ 2 ແລະ ຂໍ້ 5 ຂອງມາດຕານີ້ ໃຫ້ກະຊວງການເງິນ ອອກລະບຽບການສະເພາະ.

**ມາດຕາ 27 (ປັບປຸງ) ເງື່ອນໄຂການສົ່ງຄືນອາກອນມູນຄ່າເພີ່ມ**

ການສົ່ງຄືນ ອມພ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ຜູ້ມອບ ອມພ ທີ່ມີການສົ່ງອອກສິນຄ້າໄປຕ່າງປະເທດ ຕ້ອງ:

1.1. ຖືບັນຊີຖືກຕ້ອງຕາມກົດໝາຍວ່າດ້ວຍການບັນຊີ;

1.2. ນໍາໃຊ້ໃບເກັບເງິນ ຖືກຕ້ອງຕາມລະບຽບການກ່ຽວກັບໃບເກັບເງິນ;

1.3. ມີ ສັນຍາ ຊື້ ຂາຍ ທີ່ກ່ຽວຂ້ອງ, ເອກະສານຢັ້ງຢືນການສົ່ງອອກ ຢ່າງ ຖືກຕ້ອງ ແລະ ຄົບຖ້ວນ;

1.4. ມີການໂອນລາຍຮັບຕາມມູນຄ່າສົ່ງອອກ ກັບຄືນ ສປປ ລາວ ຮ້ອຍສ່ວນຮ້ອຍ ໂດຍຜ່ານລະບົບທະນາຄານ ຢູ່ ສປປ ລາວ ຫຼື ຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ;

1.5. ແຈ້ງ ແລະ ມອບ ອມພ ຖືກຕ້ອງ ແລະ ຄົບຖ້ວນ ຕາມກົດໝາຍ;

2. ຜູ້ມອບ ອມພ ມີສິນເຊື່ອ ອມພ ທີ່ຜ່ານການກວດກາ ສາມເດືອນ ຕິດຕໍ່ກັນ ແລະ ມີບົດບັນທຶກຈາກເຈົ້າໜ້າທີ່ສ່ວຍສາອາກອນ;

3. ຜູ້ມອບ ອມພ ທີ່ມີການຄວບກິດຈະການ ສໍາລັບຫົວໜ່ວຍທີ່ຖືກ ຍົກເລີກ, ແຍກກິດຈະການ, ຢຸດເຊົາກິດຈະການ ຫຼື ລົ້ມລະລາຍ ຕ້ອງ:

3.1. ມີສັນຍາຮ່ວມທຸລະກິດ ພ້ອມດ້ວຍເອກະສານຢັ້ງຢືນ ການຄວບ, ການແຍກ ກິດຈະການຈາກຂະແໜງການທີ່ກ່ຽວຂ້ອງ;

3.2. ມີເອກະສານຢັ້ງຢືນການມອບພັນທະອາກອນ ທີ່ຖືກຕ້ອງ ແລະ ຄົບຖ້ວນ ພ້ອມດ້ວຍເອກະສານຢັ້ງຢືນການຢຸດເຊົາກິດຈະການຂອງຂະແໜງການທີ່ກ່ຽວຂ້ອງ;

3.3. ມີຄໍາຕັດສິນຂອງສານ ແລະ ເອກະສານອື່ນ ທີ່ກ່ຽວຂ້ອງກັບການລົ້ມລະລາຍຂອງວິສາຫະກິດ;

4. ສໍານັກງານຜູ້ຕາງໜ້າ, ອົງການຈັດຕັ້ງສາກົນ ແລະ ນັກການທູດ ຕ້ອງມີການຢັ້ງຢືນ ແລະ ເຫັນດີຈາກກະຊວງການຕ່າງປະເທດ;

5. ຜູ້ໂດຍສານຂາອອກ ແລະ ນັກທ່ອງທ່ຽວຕ່າງປະເທດ ຕ້ອງມີໃບເກັບເງິນ ອມພ ແລະ ແຈ້ງສິນຄ້າຕໍ່ເຈົ້າໜ້າທີ່ພາສີປະຈໍາດ່ານສາກົນທີ່ໄດ້ກໍານົດ;

6. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ ເສຍ ອມພ ເກີນ ຕ້ອງມີເອກະສານ ແລະ ຫຼັກຖານຢັ້ງຢືນ.

ສໍາລັບການສົ່ງຄືນ ອມພ ສົ້ນເຂົ້າ ຂອງກິດຈະກໍາກ່ຽວກັບ ແຮ່ທາດ ແລະ ພະລັງງານໄຟຟ້ານັ້ນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

ການຄົ້ນຄວ້າ ແລະ ພິຈາລະນາ ການສົ່ງຄືນ ອມພ ໃຫ້ປະຕິບັດຕາມການແບ່ງຂັ້ນຄຸ້ມຄອງຂອງຂະແໜງສ່ວຍສາອາກອນ.

**ມາດຕາ 28 (ປັບປຸງ) ການຂໍຄືນອາກອນມູນຄ່າເພີ່ມ**

ການຂໍຄືນ ອມພ ໃຫ້ປະຕິບັດ ດັ່ງນີ້:

1. ຂໍຄືນເປັນແຕ່ລະເດືອນ ນັບແຕ່ເດືອນທີ່ມີ ອມພ ສິ້ນເຂົ້າເກີດຂຶ້ນ ສຳລັບ ຜູ້ມອບ ອມພ ທີ່ມີການສົ່ງອອກສິນຄ້າ, ການສະໜອງ ສິນຄ້າ ແລະ ການບໍລິການ ຢູ່ພາຍໃນປະເທດ ປົກກະຕິ ແລະ ຕໍ່ເນື່ອງ;

2. ຂໍຄືນ ອມພ ສິ້ນເຂົ້າ ທີ່ຜ່ານການຫັກບໍ່ໝົດໃນ ສາມເດືອນ ຜ່ານມາ ສຳລັບຜູ້ມອບ ອມພ ຜ່ານການກວດກາ ສາມເດືອນ ຕິດຕໍ່ກັນ ແລະ ມີບົດບັນທຶກຈາກເຈົ້າໜ້າທີ່ສ່ວຍສາອາກອນ.

3. ຂໍຄືນ ອມພ ກໍລະນີມີການຄອບກິດຈະການ ສຳລັບຫົວໜ່ວຍທີ່ຖືກ ຍົກເລີກ, ແຍກກິດຈະການ, ຢຸດເຊົາກິດຈະການ ຫຼື ລົ້ມລະລາຍ ແຕ່ບໍ່ໃຫ້ເກີນ ສາມເດືອນ ນັບແຕ່ມີການຕົກລົງຈາກຂະແໜງການທີ່ກ່ຽວຂ້ອງເປັນລາຍລັກອັກສອນ ເປັນຕົ້ນໄປ;

4. ຂໍຄືນເປັນແຕ່ລະເດືອນ ແຕ່ບໍ່ໃຫ້ເກີນ ສາມເດືອນ ນັບແຕ່ມີການສະເໜີຂອງກະຊວງການຕ່າງປະເທດ ເປັນຕົ້ນໄປ ສຳລັບ ສຳນັກງານຜູ້ຕາງໜ້າ, ອົງການຈັດຕັ້ງສາກົນ ແລະ ນັກການທູດ;

5. ຂໍຄືນເປັນແຕ່ລະຄັ້ງ ທີ່ມີການເດີນທາງອອກຈາກ ສປປ ລາວ ສຳລັບ ຜູ້ໂດຍສານຂາອອກ ແລະ ນັກທ່ອງທ່ຽວຕ່າງປະເທດ;

6. ຂໍຄືນເປັນແຕ່ລະຄັ້ງ ທີ່ມີການ ເສຍ ອມພ ເກີນ ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ.

ສຳລັບວິທີການ ແລະ ຂັ້ນຕອນ ໃນການສົ່ງຄືນເງິນ ອມພ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 29 (ປັບປຸງ) ອາກອນມູນຄ່າເພີ່ມສິ້ນເຂົ້າທີ່ບໍ່ອະນຸຍາດໃຫ້ສົ່ງຄືນ**

ອມພ ສິ້ນເຂົ້າ ທີ່ບໍ່ອະນຸຍາດໃຫ້ສົ່ງຄືນ ມີ ດັ່ງນີ້:

1. ອມພ ສິ້ນເຂົ້າທີ່ບໍ່ອະນຸຍາດໃຫ້ຫັກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້;

2. ອມພ ສິ້ນເຂົ້າທີ່ໃຫ້ຫັກ ຫຼື ສົ່ງຄືນ ແຕ່ປະຕິບັດເງື່ອນໄຂບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ແລະ 27 ຂອງກົດໝາຍສະບັບນີ້.

## ໝວດທີ 4
## ການແຈ້ງ ແລະ ການມອບ ອາກອນມູນຄ່າເພີ່ມ

**ມາດຕາ 30 (ປັບປຸງ) ການແຈ້ງອາກອນມູນຄ່າເພີ່ມ**

ການແຈ້ງ ອມພ ໃຫ້ປະຕິບັດ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳເຂົ້າສິນຄ້າ ຕ້ອງແຈ້ງ ອມພ ໃນເວລາມີການນຳເຂົ້າສິນຄ້າ ພ້ອມກັນກັບການແຈ້ງເສຍພາສີຂາເຂົ້າຢູ່ດ່ານບ່ອນນຳເຂົ້າ;

2. ຜູ້ມອບ ອມພ ຕ້ອງແຈ້ງ ອມພ ບໍ່ໃຫ້ກາຍວັນທີ 20 ຂອງເດືອນຖັດໄປ ຕໍ່ລັດຖະການສ່ວຍສາອາກອນ ບ່ອນຕົນຂຶ້ນກັບ;

3. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີການຊື້ສິນຄ້າ ແລະ ການບໍລິການ ຈາກນິຕິບຸກຄົນຕ່າງປະເທດທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ໃຫ້ແຈ້ງ ອມພ ບໍ່ໃຫ້ກາຍ ສິບຫ້າວັນ ພາຍຫຼັງຄິດໄລ່ ເກັບ ຫຼື ຫັກ ອມພ ໄວ້ຢູ່ລັດຖະການສ່ວຍສາອາກອນ ບ່ອນຕົນຂຶ້ນກັບ;

4. ຜູ້ມອບ ອມພ ໃຫ້ແຈ້ງ ອມພ ໃນແຕ່ລະຄັ້ງ ທີ່ເບີກຈ່າຍເງິນງົບປະມານແຫ່ງລັດ ຈາກການສະໜອງສິນຄ້າ ແລະ ການບໍລິການ.

ລະບຽບການ, ຂັ້ນຕອນ, ແບບພິມໃບແຈ້ງ ອມພ ແລະ ແບບພິມຕາຕະລາງລາຍງານການນຳໃຊ້ໃບເກັບເງິນ ລວມທັງການແຈ້ງຜ່ານລະບົບເອເລັກໂຕຣນິກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 31 (ປັບປຸງ) ການມອບອາກອນມູນຄ່າເພີ່ມ**

ການມອບ ອມພ ໃຫ້ປະຕິບັດ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳເຂົ້າສິນຄ້າ ໃຫ້ມອບຢູ່ດ່ານບ່ອນນຳເຂົ້າສິນຄ້າ ຫຼື ຄັງເງິນແຫ່ງຊາດ ຫຼື ຢູ່ທະນາຄານທີ່ມີບັນຊີຂອງຄັງເງິນແຫ່ງຊາດ ຫຼື ໃຫ້ມອບ ອມພ ໃນເວລາມີການສະໜອງສິນຄ້າຢູ່ພາຍໃນປະເທດ ຕາມເງື່ອນໄຂທີ່ລັດຖະບານກຳນົດ;

2. ຜູ້ມອບ ອມພ ໃຫ້ມອບ ອມພ ເປັນແຕ່ລະເດືອນ ບໍ່ໃຫ້ກາຍ ວັນທີ 20 ຂອງເດືອນຖັດໄປ ຢູ່ຄັງເງິນແຫ່ງຊາດ ຫຼື ຢູ່ທະນາຄານ ທີ່ມີບັນຊີຂອງຄັງເງິນແຫ່ງຊາດ;

3. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຊື້ສິນຄ້າ ແລະ ການບໍລິການ ຈາກນິຕິບຸກຄົນຕ່າງປະເທດ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ໃຫ້ມອບ ອມພ ຢູ່ ຄັງເງິນແຫ່ງຊາດ ຫຼື ຢູ່ທະນາຄານ ທີ່ມີບັນຊີຂອງຄັງເງິນແຫ່ງຊາດ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນຊຳລະເງິນໃຫ້ແກ່ຜູ້ສະໜອງດັ່ງກ່າວ ເປັນຕົ້ນໄປ;

4. ຜູ້ມອບ ອມພ ໃຫ້ມອບ ອມພ ໃນແຕ່ລະຄັ້ງ ທີ່ເບີກຈ່າຍເງິນງົບປະມານແຫ່ງລັດ ຈາກການສະໜອງສິນຄ້າ ແລະ ການບໍລິການ ຢູ່ຄັງເງິນແຫ່ງຊາດ ຫຼື ຢູ່ທະນາຄານ ທີ່ມີບັນຊີຂອງຄັງເງິນແຫ່ງຊາດ.

**ມາດຕາ 32 ອາກອນມູນຄ່າເພີ່ມ ທີ່ຕ້ອງມອບ ຫຼື ຍົກໄປຫັກໃນເດືອນຖັດໄປ**

ອມພ ທີ່ ຕ້ອງມອບ ຫຼື ຍົກໄປຫັກໃນເດືອນຖັດໄປ ແມ່ນ ຜົນລົບລະຫວ່າງ ອມພ ສົ້ນອອກ ແລະ ອມພ ສົ້ນເຂົ້າ ທີ່ສາມາດຫັກໄດ້ ໃນກໍລະນີ ອມພ ສົ້ນອອກ ຫາກຫຼາຍກວ່າ ອມພ ສົ້ນເຂົ້າ ໃຫ້ຖືວ່າມີ ອມພ ທີ່ຕ້ອງມອບຕື່ມ, ໃນກໍລະນີ ອມພ ສົ້ນອອກ ຫາກໜ້ອຍກວ່າ ອມພ ສົ້ນເຂົ້າ ໃຫ້ຖືວ່າມີ ອມພ ທີ່ຕ້ອງໄດ້ຍົກໄປຫັກໃນເດືອນຖັດໄປ.

## ໝວດທີ 5
## ການເຂົ້າ, ການອອກ ລະບົບອາກອນມູນຄ່າເພີ່ມ

**ມາດຕາ 33 (ປັບປຸງ) ການເຂົ້າໃນລະບົບອາກອນມູນຄ່າເພີ່ມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ພ້ອມທັງໄດ້ຮັບເລກປະຈຳຕົວຜູ້ເສຍອາກອນ ແລະ ໄດ້ຮັບອະນຸຍາດດຳເນີນທຸລະກິດ ຈາກຂະແໜງການທີ່ກ່ຽວຂ້ອງ ຕ້ອງໄດ້ເຂົ້າໃນລະບົບ ອມພ.

ສຳລັບ ການເຂົ້າໃນລະບົບ ອມພ ຂອງຈຸນລະວິສາຫະກິດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 34 (ປັບປຸງ) ການອອກຈາກລະບົບອາກອນມູນຄ່າເພີ່ມ**

ຜູ້ມອບ ອມພ ຈະຖືກອອກຈາກລະບົບ ໃນກໍລະນີ ຄວບກິດຈະການ ສຳລັບຫົວໜ່ວຍທີ່ຖືກ ຍົກເລີກ, ຢຸດເຊົາ ຫຼື ລົ້ມລະລາຍ.

## ໝວດທີ 6
## ການຖືບັນຊີ ແລະ ການອອກໃບເກັບເງິນອາກອນມູນຄ່າເພີ່ມ

**ມາດຕາ 35 ການຖືບັນຊີ**

ຜູ້ມອບ ອມພ ຕ້ອງຖືບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ.

ຂໍ້ມູນຢັ້ງຢືນການລົງບັນຊີ, ເອກະສານການບັນຊີ ຕ້ອງເກັບຮັກສາໄວ້ພາຍໃນເວລາ ສິບປີ ແລະ ໃຫ້ນຳສະເໜີໄດ້ທຸກເວລາ ຖ້າຫາກມີການກວດກາຂອງ ເຈົ້າໜ້າທີ່ສ່ວຍສາອາກອນ ຫຼື ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ.

**ມາດຕາ 36 ການອອກໃບເກັບເງິນ**

ການອອກໃບເກັບເງິນ ແມ່ນ ການອອກເອກະສານຢັ້ງຢືນ ການບັນທຶກບັນຊີ, ການສະໜອງ ສິນຄ້າ ແລະ ການບໍລິການ, ການຈ່າຍ ອມພ ໃນເວລາຊື້, ການເກັບ ອມພ ເວລາສະໜອງ, ການຫັກ ແລະ ການຂໍຄືນ ອມພ.

ຜູ້ມອບ ອມພ ທຸກຄັ້ງທີ່ມີການສະໜອງ ສິນຄ້າ ແລະ ການບໍລິການ ຕ້ອງອອກໃບເກັບເງິນໃຫ້ແກ່ຜູ້ຊື້ ໃຫ້ຖືກຕ້ອງຕາມລະບຽບການ.

ການອອກໃບເກັບເງິນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 37 (ປັບປຸງ) ມາດຕະຖານການລາຍງານການເງິນ ແລະ ການນຳໃຊ້ໃບເກັບເງິນ**

ຜູ້ມອບ ອມພ ຕ້ອງປະຕິບັດມາດຕະຖານລາຍງານການເງິນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ ແລະ ການນຳໃຊ້ໃບເກັບເງິນທີ່ຖືກຕ້ອງຕາມລະບຽບການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 7
## ການກວດກາ ແລະ ການຄຸ້ມຄອງ ອາກອນມູນຄ່າເພີ່ມທີ່ຄ້າງມອບ

**ມາດຕາ 38 (ປັບປຸງ) ການກວດກາ**

ການກວດກາ ແນໃສ່ຮັບປະກັນການປະຕິບັດພັນທະຂອງ ຜູ້ມອບ ອມພ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

ການກວດກາ ສາມາດດຳເນີນ ດັ່ງນີ້:

1. ກວດກາເອກະສານ ຂອງ ຜູ້ມອບ ອມພ ຢູ່ລັດຖະການສ່ວຍສາອາກອນ;
2. ກວດກາເອກະສານ ຂອງ ຜູ້ມອບ ອມພ ຢູ່ ສຳນັກງານ, ສາຂາ ຫຼື ຕົວແທນຈຳໜ່າຍ ລວມທັງ ສາງສິນຄ້າ, ສະຖານທີ່ ການຜະລິດ, ການສະໜອງ ສິນຄ້າ ແລະ ການບໍລິການ;
3. ກວດກາສິນຄ້າຕົວຈິງ ຂອງ ຜູ້ມອບ ອມພ ຢູ່ສະຖານທີ່ ທີ່ກ່ຽວຂ້ອງ ເປັນຕົ້ນ ຢູ່ ສາງ, ບ່ອນເຄື່ອນຍ້າຍສິນຄ້າ ຢູ່ພາຍໃນປະເທດ.

ການກວດກາ ສາມາດດຳເນີນຕາມຮູບການ ປົກກະຕິ, ແຈ້ງໃຫ້ຮູ້ລ່ວງໜ້າ ຫຼື ກະທັນຫັນ.

ຜູ້ຖືກກວດກາ ຕ້ອງໃຫ້ຄວາມຮ່ວມມືໃນການກວດກາຂອງເຈົ້າໜ້າທີ່, ພາຍຫຼັງສຳເລັດການກວດກາ ທຸກຄັ້ງແລ້ວ ເຈົ້າໜ້າທີ່ກວດກາ ຕ້ອງເຮັດບົດບັນທຶກການກວດກາເປັນລາຍລັກອັກສອນ ໂດຍຊ້ອງໜ້າ ຜູ້ມອບ ອມພ ທີ່ຖືກກວດກາ, ຫຼັງຈາກນັ້ນ ຕ້ອງອ່ານ ຫຼື ໃຫ້ຜູ້ກ່ຽວອ່ານບົດບັນທຶກດັ່ງກ່າວ ດ້ວຍຕົນເອງ ແລ້ວໃຫ້ລົງລາຍເຊັນໄວ້ເປັນຫຼັກຖານ.

ໃນການກວດການັ້ນ ເຈົ້າໜ້າທີ່ກວດກາຕ້ອງປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

**ມາດຕາ 39 ການຄຸ້ມຄອງອາກອນມູນຄ່າເພີ່ມ ທີ່ຄ້າງມອບ**

ອມພ ທີ່ຄ້າງມອບ ມີ ດັ່ງນີ້:

1. ອມພ ຈາກການແຈ້ງມອບທີ່ບໍ່ທັນໄດ້ມອບ;
2. ອມພ ຈາກ ການກວດກາ ຫຼື ກໍລະນີອື່ນ ທີ່ຜູ້ມອບ ອມພ ບໍ່ທັນໄດ້ມອບ.

ການຄຸ້ມຄອງ ອມພ ທີ່ຄ້າງມອບ ດຳເນີນດ້ວຍການບັນທຶກ ຕິດຕາມເປົ້າໝາຍ, ຈຳນວນ ອມພ ທີ່ຄ້າງມອບ, ເລັ່ງທວງ ແລະ ເກັບເຂົ້າງົບປະມານໃຫ້ຄົບຖ້ວນ.

## ພາກທີ III
## ສິດ ແລະ ໜ້າທີ່ ຂອງ ຜູ້ມອບອາກອນມູນຄ່າເພີ່ມ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ

**ມາດຕາ 40 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຜູ້ມອບອາກອນມູນຄ່າເພີ່ມ**

ຜູ້ມອບ ອມພ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜູ້ມອບ ອມພ ມີ ສິດ:

1.1. ໄດ້ຮັບການສະໜອງ ຂໍ້ມູນ ຂ່າວສານ, ການຊີ້ແຈງ, ການອະທິບາຍ ແລະ ການໃຫ້ຄຳແນະນຳກ່ຽວກັບ ອມພ;

1.2. ໄດ້ຮັບການຮັກສາຄວາມລັບ ກ່ຽວກັບຂໍ້ມູນຂອງຜູ້ມອບ ອມພ;

1.3. ໄດ້ຮັບເງິນ ອມພ ທີ່ມອບເກີນນັ້ນຄືນ ຕາມກົດໝາຍ;

1.4. ຮ້ອງທຸກ ກ່ຽວກັບການກະທຳຂອງ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ສ່ວຍສາອາກອນ ຫຼື ການຈັດຕັ້ງ ທີ່ບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບກົດໝາຍ;

1.5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

2. ຜູ້ມອບ ອມພ ມີ ໜ້າທີ່:

2.1. ຄິດໄລ່ເກັບ, ຫັກ, ແຈ້ງ ແລະ ມອບ ອມພ ໃຫ້ ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;

2.2. ຮັບຜິດຊອບ ຕໍ່ ການແຈ້ງ ລາຍຮັບ, ຄິດໄລ່ເກັບ ອມພ ສົ້ນອອກ ແລະ ລາຍຈ່າຍ, ອມພ ສົ້ນເຂົ້າ ຕິດພັນກັບ ການຫັກ ຫຼື ການຂໍຄືນ ອມພ ໃຫ້ຊັດເຈນ ແລະ ຖືກຕ້ອງ ຕາມຄວາມຈິງ;

2.3. ຮັບຜິດຊອບ ມອບ ອມພ ສົ້ນອອກ ຈາກການ ບໍ່ຄິດໄລ່ເກັບ ຫຼື ຄິດໄລ່ເກັບບໍ່ຖືກຈາກສິນຄ້າທີ່ຖືກເສຍ ອມພ;

2.4. ລາຍງານບັນຊີເງິນຝາກຂອງຕົນຢູ່ ຄັງເງິນ, ທະນາຄານ ແລະ ສະຖາບັນການເງິນອື່ນໃຫ້ແກ່ລັດຖະການສ່ວຍສາອາກອນ;

2.5. ລາຍງານ ມູນຄ່າ ອມພ ທີ່ໄດ້ຮັບການຍົກເວັ້ນ ແລະ ອັດຕາສູນສ່ວນຮ້ອຍ ຕາມກົດໝາຍ ແລະ ຕາມການຕົກລົງຂອງລັດຖະບານ;

2.6. ຖືບັນຊີ ແລະ ນຳໃຊ້ໃບເກັບເງິນ ຕາມກົດໝາຍ ແລະ ລະບຽບການ;

2.7. ສະໜອງເອກະສານ ທີ່ພົວພັນກັບການກວດກາ ອມພ ໃຫ້ແກ່ ລັດຖະການສ່ວຍສາອາກອນ ຕາມລະບຽບການ ເຊັ່ນ:

2.7.1. ເອກະສານນຳເຂົ້າສິນຄ້າທີ່ຜ່ານການຮັບຮອງຈາກຂະແໜງພາສີ ແລະ ຫຼັກຖານການຈ່າຍ ພາສີ, ອາກອນ;

2.7.2. ໃບເກັບເງິນ ອມພ;

2.7.3. ສັນຍາ, ຫຼັກຖານການຈ່າຍ ອມພ ແລະ ອາກອນກໍາໄລ (ຖ້າມີ) ຈາກນິຕິບຸກຄົນຕ່າງປະເທດ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ;

2.7.4. ບົດສະຫຼຸບບັນຊີ ກ່ຽວກັບສາງສິນຄ້າ;

2.7.5. ບັນຊີທະນາຄານ.

2.8. ປະຕິບັດ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ຂອງລັດຖະການສ່ວຍສາອາກອນ ກ່ຽວກັບ ອມພ ທີ່ຄ້າງມອບ ແລະ ຄ່າປັບໃໝ, ຖ້າຫາກຍັງ ບໍ່ເອົາໃຈໃສ່ ແລະ ບໍ່ໃຫ້ຄວາມຮ່ວມມື ກໍຕ້ອງຍິນຍອມໃຫ້ ຍຶດ ຫຼື ອາຍັດ ຊັບສິນທີ່ຕົນມີ ຊຶ່ງມີມູນຄ່າເທົ່າກັບຈໍານວນເງິນ ອມພ ທີ່ຕົນຄ້າງມອບ;

2.9. ຮັກສາ ແລະ ເກັບມ້ຽນ ເອກະສານ ທີ່ພົວພັນກັບການກວດກາ ອມພ ຕາມກົດໝາຍ;

2.10. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງພາກສ່ວນອື່ນທີ່ກ່ຽວຂ້ອງ**

ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ, ກວດກາ ການຄິດໄລ່, ການເກັບ, ການຫັກ, ການມອບ ແລະ ການສົ່ງຄືນ ອມພ ຂອງລັດຖະການສ່ວຍສາອາກອນ;
2. ໄດ້ຮັບການປົກປ້ອງ ແລະ ຮັກສາຄວາມລັບ ກ່ຽວກັບ ອມພ ຕາມກົດໝາຍ;
3. ສະໜອງຂໍ້ມູນ ກ່ຽວກັບ ຜູ້ມອບ ອມພ;
4. ແຈ້ງ ແລະ ລາຍງານ ການລະເມີດກົດໝາຍ ກ່ຽວກັບ ອມພ ຕໍ່ລັດຖະການສ່ວຍສາອາກອນ;
5. ຮັກສາ ແລະ ເກັບມ້ຽນ ເອກະສານກ່ຽວກັບ ອມພ ຕາມກົດໝາຍ;
6. ໃຫ້ຄວາມຮ່ວມມື ແລະ ຊ່ວຍເຫຼືອ ລັດຖະການສ່ວຍສາອາກອນ ຕາມພາລະບົດບາດຂອງຕົນ;
7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ພາກທີ IV
## ຂໍ້ຫ້າມ

**ມາດຕາ 42 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ປະຕິເສດການສະໜອງ ຂໍ້ມູນ ຂ່າວສານ ກ່ຽວກັບ ການກະທໍາຜິດ ຫຼື ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ອມພ;
2. ຮ່ວມກັນ ກະທໍາຜິດ, ປົກປິດ ແລະ ຊຸກເຊື່ອງ ຜູ້ກະທໍາຜິດ ກ່ຽວກັບວຽກງານ ອມພ;
3. ໃຫ້ ຫຼື ຮັບສິນບົນ, ຄ່າຈ້າງ ລາງວັນ, ສົມຮູ້ຮ່ວມຄິດເອົາເງິນຂອງລັດ;
4. ໝິ່ນປະໝາດ, ບັງຄັບ ນາບຂູ່, ທໍາຮ້າຍຮ່າງກາຍ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ພາສີ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ, ຜູ້ເສຍ ຫຼື ຜູ້ມອບ ອມພ;
5. ຄິດໄລ່ເກັບ ອມພ ໂດຍບໍ່ມອບເຂົ້າງົບປະມານ ຢ່າງຖືກຕ້ອງ ແລະ ຄົບຖ້ວນ;
6. ປະຕິເສດການຈ່າຍ ອມພ ຈາກການນໍາເຂົ້າສິນຄ້າ ຫຼື ການຊື້ສິນຄ້າ ແລະ ການບໍລິການ ຢູ່ພາຍໃນປະເທດ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 43 (ປັບປຸງ) ຂໍ້ຫ້າມສຳລັບ ຜູ້ເສຍ ແລະ ຜູ້ມອບ ອາກອນມູນຄ່າເພີ່ມ**

ຫ້າມ ຜູ້ເສຍ ແລະ ຜູ້ມອບ ອມພ ມີພຶດຕິກຳ ດັ່ງນີ້:

1. ຄິດໄລ່ເກັບ, ຫັກ, ແຈ້ງ ແລະ ມອບ ອມພ ບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ແລະ ບໍ່ທັນເວລາ;

2. ທຳລາຍ, ປອມແປງ ຂໍ້ມູນ ຫຼັກຖານ, ປົກປິດ, ເຊື່ອງອຳລາຍຮັບ ແລະ ຊຸກເຊື່ອງການກະທຳຜິດທີ່ຕິດພັນກັບການເສຍອາກອນ;

3. ນຳໃຊ້ໃບເກັບເງິນທີ່ ບໍ່ຖືກຕ້ອງຕາມແບບພິມຂອງກະຊວງການເງິນ ຫຼື ພິມ, ນຳໃຊ້ແບບພິມທີ່ບໍ່ໄດ້ຮັບອະນຸຍາດ;

4. ໃຫ້ ຫຼື ຮັບ ສິນບົນ, ຄ່າຈ້າງ, ລາງວັນ, ສົມຮູ້ຮ່ວມຄິດ ກັບ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ພາສີ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ ເອົາເງິນຂອງລັດ;

5. ປອມແປງເອກະສານ ແລະ ນຳໃຊ້ເອກະສານປອມ ກ່ຽວກັບວຽກງານ ອມພ;

6. ໝິ່ນປະໝາດ, ບັງຄັບ ນາບຂູ່, ທຳຮ້າຍຮ່າງກາຍ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ພາສີ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 44 (ປັບປຸງ) ຂໍ້ຫ້າມສຳລັບ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ພາສີ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ**

ຫ້າມ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ພາສີ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຄວາມລັບຂອງ ລັດ, ທາງລັດຖະການ ແລະ ຂໍ້ມູນທີ່ເປັນຄວາມລັບຂອງຜູ້ມອບ ອມພ;

2. ສ້າງຄວາມຫຍຸ້ງຍາກ, ຖ່ວງດຶງ, ແກ່ຍາວເວລາໃນການ ຄົ້ນຄວ້າ, ແກ້ໄຂ ແລະ ປອມແປງເອກະສານ ກ່ຽວກັບ ອມພ;

3. ປະລະໜ້າທີ່ ແລະ ຂາດຄວາມຮັບຜິດຊອບ ຕໍ່ວຽກງານທີ່ໄດ້ຮັບມອບໝາຍ;

4. ສວຍໃຊ້ໜ້າທີ່ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ທວງເອົາ, ຂໍເອົາ ຫຼື ຮັບສິນບົນເພື່ອຜົນປະໂຫຍດ ຂອງຕົນ, ຄອບຄົວ, ຍາດພີ່ນ້ອງ, ຈຸ້ມເຈື້ອ, ພັກພວກ ຫຼື ໝູ່ຄະນະ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍ ແກ່ຜົນປະໂຫຍດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

5. ເກັບ ອມພ ໂດຍບໍ່ແມ່ນໜ້າທີ່ຮັບຜິດຊອບຂອງຕົນ ຫຼື ບໍ່ໄດ້ຮັບອະນຸຍາດຈາກການຈັດຕັ້ງທີ່ກ່ຽວຂ້ອງ;

6. ນຳເອົາເງິນ ອມພ ທີ່ເກັບໄດ້ໄປນຳໃຊ້ ໂດຍບໍ່ມອບເຂົ້າງົບປະມານແຫ່ງລັດ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ V
## ການແກ້ໄຂຄໍາສະເໜີ ກ່ຽວກັບອາກອນມູນຄ່າເພີ່ມ

**ມາດຕາ 45 ການຍື່ນຄໍາສະເໜີຂອງ ຜູ້ມອບອາກອນມູນຄ່າເພີ່ມ**

ຜູ້ມອບ ອມພ ມີສິດຍື່ນຄໍາສະເໜີ ກ່ຽວກັບ ການປະຕິບັດ ອມພ ທີ່ຕົນເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ. ຄໍາສະເໜີຕ້ອງຍື່ນໂດຍກົງຕໍ່ລັດຖະການສ່ວຍສາອາກອນບ່ອນຕົນຂຶ້ນກັບ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບໃບສັ່ງມອບ ຫຼື ແຈ້ງການ ຂອງລັດຖະການສ່ວຍສາອາກອນ ຫຼື ວັນພົບເຫັນເຫດການທີ່ຕົນເຫັນວ່າບໍ່ຖືກຕ້ອງນັ້ນ ເປັນຕົ້ນໄປ.

ລັດຖະການສ່ວຍສາອາກອນ ທີ່ໄດ້ຮັບຄໍາສະເໜີ ມີສິດທວງໃຫ້ຜູ້ສະເໜີສະໜອງບັນດາເອກະສານ, ຂໍ້ມູນຕ່າງໆ ທີ່ກ່ຽວຂ້ອງກັບການສະເໜີນັ້ນໃຫ້ຕົນ.

**ມາດຕາ 46 ການພິຈາລະນາແກ້ໄຂຄໍາສະເໜີ**

ລັດຖະການສ່ວຍສາອາກອນ ຕ້ອງພິຈາລະນາແກ້ໄຂ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄໍາສະເໜີນັ້ນ ເປັນຕົ້ນໄປ, ຍົກເວັ້ນກໍລະນີມີຄວາມຫຍຸ້ງຍາກສັບສົນ ກໍສາມາດຕໍ່ເວລານັ້ນໄດ້ ແຕ່ບໍ່ໃຫ້ເກີນ ຫົກສິບວັນ.

ການຕົກລົງແກ້ໄຂຂອງລັດຖະການສ່ວຍສາອາກອນ ມີຜົນບັງຄັບປະຕິບັດສໍາລັບ ຜູ້ມອບ ອມພ, ເວັ້ນເສຍແຕ່ຫາກຍັງບໍ່ເຫັນດີນໍາການຕົກລົງແກ້ໄຂນັ້ນ ກໍມີສິດນໍາສະເໜີຕໍ່ລັດຖະການສ່ວຍສາອາກອນຂັ້ນເທິງຖັດນັ້ນ ພາຍໃນເວລາ ຊາວວັນ ເພື່ອພິຈາລະນາແກ້ໄຂ ເປັນຂັ້ນສຸດທ້າຍ.

ໃນກໍລະນີ ຜູ້ມອບ ອມພ ຍັງບໍ່ເຫັນດີນໍາການແກ້ໄຂຄໍາສະເໜີຂອງລັດຖະການສ່ວຍສາອາກອນຂັ້ນສຸດທ້າຍແລ້ວ ກໍມີສິດສະເໜີຕາມກົດໝາຍວ່າດ້ວຍການແກ້ໄຂຄໍາຮ້ອງທຸກ.

ລັດຖະການສ່ວຍສາອາກອນ ຕ້ອງສົ່ງຈໍານວນ ອມພ ແລະ ຄ່າປັບໃໝ ທີ່ມອບເກີນຄືນພາຍໃນເວລາ ສິບຫ້າວັນ ນັບແຕ່ວັນມີການຕົກລົງຂອງລັດຖະການສ່ວຍສາອາກອນຂັ້ນເທິງຖັດນັ້ນ ເປັນຕົ້ນໄປ.

## ພາກທີ VI
## ການຄຸ້ມຄອງ ແລະ ການກວດກາ ວຽກງານອາກອນມູນຄ່າເພີ່ມ
### ໝວດ 1
### ການຄຸ້ມຄອງວຽກງານອາກອນມູນຄ່າເພີ່ມ

**ມາດຕາ 47 ອົງການຄຸ້ມຄອງວຽກງານອາກອນມູນຄ່າເພີ່ມ**

ລັດຖະບານ ຄຸ້ມຄອງວຽກງານ ອມພ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງການເງິນ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານ ອມພ ປະກອບດ້ວຍ:

1. ກະຊວງການເງິນ;
2. ກົມສ່ວຍສາອາກອນ;
3. ສ່ວຍສາອາກອນປະຈໍາ ແຂວງ, ນະຄອນຫຼວງ;
4. ສ່ວຍສາອາກອນປະຈໍາ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 48 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

ໃນການຄຸ້ມຄອງວຽກງານ ອມພ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານ ອມພ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານ ອມພ ເປັນ ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານ ອມພ;

4. ຮັບຜິດຊອບຕໍ່ລັດຖະບານ ໃນການຄຸ້ມຄອງ ການຈັດຕັ້ງປະຕິບັດວຽກງານ ອມພ ໃນຂອບເຂດທົ່ວປະເທດ;

5. ຝຶກອົບຮົມ, ໃຫ້ຄໍາແນະນໍາ ແກ່ຫົວໜ່ວຍທຸລະກິດ ທີ່ກ່ຽວຂ້ອງກັບວຽກງານ ອມພ;

6. ຊີ້ນໍາ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານ ອມພ ແລະ ການປະຕິບັດໜ້າທີ່ຂອງ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ;

7. ຊີ້ນໍາວຽກງານວິຊາສະເພາະ, ຄຸ້ມຄອງ, ສ້າງ, ຍົກລະດັບວິຊາການໃຫ້ແກ່ບຸກຄະລາກອນ, ສະໜອງງົບປະມານ ແລະ ປະກອບພາຫະນະ, ອຸປະກອນເຕັກນິກ ຮັບໃຊ້ກົງຈັກ ອມພ;

8. ປະສານສົມທົບກັບ ຄະນະກໍາມະການປົກຄອງຂັ້ນແຂວງ ໃນການແຕ່ງຕັ້ງ, ຍົກຍ້າຍ, ປົດຕໍາແໜ່ງ, ປະຕິບັດນະໂຍບາຍ ຫຼື ລົງວິໄນ ຕໍ່ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ;

9. ປະສານສົມທົບກັບ ກະຊວງອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງກັບວຽກງານ ອມພ;

10. ຮັບ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີຂອງ ຜູ້ມອບ ອມພ ໃນຂອບເຂດທົ່ວປະເທດ;

11. ພົວພັນ ຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານ ອມພ;

12. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດວຽກງານ ອມພ ຕໍ່ລັດຖະບານຢ່າງເປັນປົກກະຕິ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 49 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກົມສ່ວຍສາອາກອນ**

ໃນການຄຸ້ມຄອງວຽກງານ ອມພ ກົມສ່ວຍສາອາກອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ ຫຼື ໂຄງການ ກ່ຽວກັບວຽກງານ ອມພ ເພື່ອສະເໜີຕໍ່ກະຊວງການເງິນ ພິຈາລະນາ;

2. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ ຫຼື ໂຄງການ ກ່ຽວກັບວຽກງານ ອມພ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານ ອມພ;

4. ຊີ້ນໍາ ແລະ ຕິດຕາມ ກວດກາ ການເຄື່ອນໄຫວວຽກງານ ອມພ ຂອງສ່ວຍສາອາກອນປະຈໍາຂັ້ນແຂວງ ແລະ ຂັ້ນເມືອງ;

5. ຄົ້ນຄວ້າລຶບລ້າງ ເອກະສານທີ່ອີງການຄຸ້ມຄອງວຽກງານ ອມພ ຂັ້ນລຸ່ມຂອງຕົນ ອອກໂດຍບໍ່ຖືກຕ້ອງ;

6. ຄົ້ນຄວ້າ ແລະ ພິຈາລະນາຕົກລົງ ກ່ຽວກັບການສົ່ງຄືນ ອມພ ຕາມການສະເໜີຂອງ ຜູ້ເສຍອາກອນ ຫຼື ສ່ວຍສາອາກອນປະຈຳ ແຂວງ, ນະຄອນຫຼວງ;

7. ນຳໃຊ້ເຕັກໂນໂລຊີ ເຂົ້າໃນວຽກງານຄຸ້ມຄອງ, ຕິດຕາມວຽກງານ ອມພ;

8. ຄຸ້ມຄອງ ແລະ ນຳໃຊ້ລະບົບຄຸ້ມຄອງຂໍ້ມູນລາຍຮັບສ່ວຍສາອາກອນ;

9. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ກ່ຽວກັບວຽກງານ ອມພ;

10. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານ ອມພ;

11. ພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານ ອມພ ຕາມການມອບໝາຍ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ອມພ ຕໍ່ກະຊວງການເງິນ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 50 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສ່ວຍສາອາກອນປະຈຳ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານ ອມພ ສ່ວຍສາອາກອນປະຈຳ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ຮ່າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ ແລະ ລະບຽບການ ກ່ຽວກັບວຽກງານ ອມພ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ອມພ;

3. ຝຶກອົບຮົມ, ໃຫ້ຄຳແນະນຳ ແກ່ຫົວໜ່ວຍທຸລະກິດທີ່ກ່ຽວຂ້ອງ ກັບວຽກງານ ອມພ;

4. ສ້າງແຜນການເກັບລາຍຮັບຈາກ ອມພ ປະຈຳປີຂອງ ແຂວງ, ນະຄອນຫຼວງ;

5. ຮັບຜິດຊອບຕໍ່ກະຊວງການເງິນ ໃນການຄຸ້ມຄອງການຈັດຕັ້ງປະຕິບັດ ການເກັບ ອມພ ໃຫ້ຄົບຖ້ວນ, ຖືກຕ້ອງ ຕາມກົດໝາຍ;

6. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ກວດກາ ການປະຕິບັດໜ້າທີ່ຂອງສ່ວຍສາອາກອນປະຈຳ ເມືອງ, ເທດສະບານ, ນະຄອນ ແລະ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ;

7. ສະເໜີລັດຖະມົນຕີກະຊວງການເງິນ ພິຈາລະນາ ຍ້ອງຍໍຜູ້ມີຜົນງານ ແລະ ລົງວິໄນ ຕໍ່ຜູ້ລະເມີດກົດໝາຍ ໂດຍປະສານສົມທົບກັບ ຄະນະກຳມະການປົກຄອງຂັ້ນແຂວງ;

8. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ຜູ້ມອບ ອມພ;

9. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານ ອມພ ຕາມການມອບໝາຍຂອງຂັ້ນເທິງ;

10. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດວຽກງານ ອມພ ຕໍ່ ກະຊວງການເງິນ ແລະ ຄະນະກຳມະການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 51 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສ່ວຍສາອາກອນປະຈຳ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານ ອມພ ສ່ວຍສາອາກອນປະຈຳ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ຮ່າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ ແລະ ລະບຽບການ ກ່ຽວກັບວຽກງານ ອມພ;
2. ເຜີຍແຜ່ ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບ ວຽກງານ ອມພ;
3. ຝຶກອົບຮົມ, ແນະນຳ ຫຼືອໜ່ວຍທຸລະກິດທີ່ກ່ຽວຂ້ອງກັບວຽກງານ ອມພ;
4. ເປັນເຈົ້າການຈັດຕັ້ງປະຕິບັດ, ຄຸ້ມຄອງ ແລະ ເກັບ ອມພ;
5. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດໜ້າທີ່ ຂອງ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນ;
6. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງ ຜູ້ມອບ ອມພ;
7. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດວຽກງານ ອມພ ຕໍ່ສ່ວຍສາອາກອນປະຈຳ ແຂວງ, ນະຄອນຫຼວງ ແລະ ຄະນະກຳມະການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການກວດກາວຽກງານອາກອນມູນຄ່າເພີ່ມ

**ມາດຕາ 52 ອົງການກວດກາວຽກງານອາກອນມູນຄ່າເພີ່ມ**

ອົງການກວດກາວຽກງານ ອມພ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັບອົງການຄຸ້ມຄອງວຽກງານ ອມພ ຕາມທີ່ ໄດ້ກຳນົດໄວ້ໃນມາດຕາ 47 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ ແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງ ມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 53 (ໃໝ່) ເນື້ອໃນການກວດກາ**

ການກວດກາວຽກງານ ອມພ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານ ອມພ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການຄຸ້ມຄອງວຽກງານ ອມພ;
3. ການນຳໃຊ້ສິດ, ການປະຕິບັດໜ້າທີ່ ແລະ ການນຳໃຊ້ມາດຕະການຕໍ່ຜູ້ລະເມີດ;
4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 54 (ໃໝ່) ການກວດກາທາງດ້ານວິຊາການ**

ການກວດກາທາງດ້ານວິຊາການ ກ່ຽວກັບວຽກງານ ອມພ ມີ ດັ່ງນີ້:

1. ແຜນການເກັບພັນທະ ອມພ;
2. ການແຈ້ງ ແລະ ການມອບ ອມພ ຂອງຜູ້ມອບ ອມພ;
3. ການກວດກາຫຼັງການເສຍ ອມພ;
4. ການສົ່ງຄືນ ອມພ;
5. ສະຖານທີ່, ວັດຖຸປະກອນ ແລະ ເອກະສານ ກ່ຽວກັບການຄິດໄລ່ ອມພ;
6. ການສະຫຼຸບ ການເກັບ ແລະ ການມອບ ພັນທະ ອມພ;
7. ເນື້ອໃນອື່ນ ທີ່ກ່ຽວຂ້ອງກັບວຽກງານ ອມພ.

**ມາດຕາ 55 ຮູບການ ການກວດກາ**

ການກວດກາ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະ ມີການກໍານົດເວລາອັນແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການກວດກາວຽກງານ ອມພ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ພາກທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 56 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ, ອໍານວຍຄວາມສະດວກ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 57 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ອມພ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

**ມາດຕາ 58 (ປັບປຸງ) ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີພຶດຕິກໍາລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ອມພ ຈະຖືກປັບໃໝ ຕາມແຕ່ລະກໍລະນີ.

ສໍາລັບລາຍລະອຽດຂອງພຶດຕິກໍາ ແລະ ອັດຕາປັບໃໝ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 59 (ໃໝ່) ການປ່ຽນແປງອັດຕາອາກອນມູນຄ່າເພີ່ມ**

ໃນກໍລະນີຈຳເປັນ ຮີບດ່ວນ ທີ່ຕ້ອງໄດ້ປ່ຽນແປງອັດຕາ ອມພ ເພື່ອໃຫ້ສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະນັ້ນ ໃຫ້ລັດຖະບານ ຄົ້ນຄວ້າ ແລ້ວສະເໜີຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາ ນຳສະເໜີຕໍ່ປະທານປະເທດ ອອກລັດຖະບັນຍັດປະກາດໃຊ້, ຫຼັງຈາກນັ້ນ ຄະນະປະຈຳສະພາແຫ່ງຊາດ ຕ້ອງລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ເທື່ອຖັດໄປ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ບໍ່ມີສິດປ່ຽນແປງອັດຕາ ອມພ.

**ມາດຕາ 60 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 61 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 1 ມັງກອນ 2025 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018 ແລະ ມາດຕາ 2 ໂຮແມັງ II ຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 7 ສິງຫາ 2021.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ